# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລາມລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ເມສາ 2026
ປີທີ 15
ສະບັບທີ 1060
ລາຍສັບປະດາ


## ປະທານປະເທດ ເນັ້ນໃຫ້ລັດຖະບານ ເລັ່ງແກ້ໄຂບັນຫາເຄັ່ງຮ້ອນທີ່ເກີດຂຶ້ນໃນສັງຄົມ



(ສພຊ) - ວາລະດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງລັດຖະບານ ຊຸດທີ X ໃນວັນທີ 31 ມີນານີ້, ທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ໄດ້ມີຄຳເຫັນໂອລົມໂດຍເນັ້ນໜັກໃຫ້ລັດຖະບານ ສືບຕໍ່ເອົາໃຈໃສ່ແກ້ໄຂບັນຫາເຄັ່ງຮ້ອນຕ່າງໆ ທີ່ເກີດຂຶ້ນໃນສັງຄົມ ເປັນຕົ້ນ: ບັນຫານ້ຳມັນເຊື້ອໄຟ, ອັດຕາເງິນເຟີ້-ຮັກສາສະຖຽນລະພາບຄ່າຂອງເງິນກີບ, ຮັກສາສະຖຽນລະພາບຂອງຄັງເງິນແຫ່ງຊາດແລະເພີ່ມຄັງສຳຮອງເງິນຕາຕ່າງປະເທດ, ເລັ່ງລັດໂຄງການຜະລິດເປັນສິນຄ້າ ທົດແທນການນຳເຂົ້າ ແລະ ຜະລິດເພື່ອສົ່ງອອກ; ຄົ້ນຄວ້າສົ່ງເສີມການຜະລິດສິນຄ້າທີ່ມູນຄ່າສູງ, ຕົ້ນທຶນ ແລະ ຄ່າຂົນສົ່ງຕ່ຳ; ເລັ່ງປັບປຸງສ້ອມແປງເສັ້ນທາງທີ່ມີລັກສະນະເປັນອຳມະພາດ, ປັບປຸງສ້ອມແປງເສັ້ນທາງ

ອ່ານຕໍ່ໜ້າ 8



### ແນວຄິດປະທານ ໄກສອນ ພົມວິຫານ ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ໃນຕໍ່ໜ້ານີ້ ພວກເຮົາຕ້ອງຫັນກຳລັງໄປສູ່ຊົນນະບົດ, ຂຶ້ນໄປເຂດພູດອຍ ແລະ ລົງຮາກຖານ ຄຽງຄູ່ກັບການເປີດກວ້າງການພົວພັນກັບຕ່າງປະເທດ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 331)

ປະຊາທິປະໄຕ ຕ້ອງໄປຄຽງຄູ່ກັບວິໄນ ແລະ ຕິດພັນກັບການນຳພາຂອງພັກ, ຖ້າຂາດລະບຽບວິໄນອັນເຂັ້ມງວດ, ບໍ່ປະຕິບັດຕາມກົດໝາຍຢ່າງເຄັ່ງຄັດແລ້ວ ກໍບໍ່ອາດມີປະຊາທິປະໄຕອັນແທ້ຈິງ ແລະ ກໍບໍ່ອາດຮັບປະກັນສິດຜົນປະໂຫຍດທາງດ້ານການເມືອງ ແລະ ສັງຄົມ ຂອງພົນລະເມືອງໄດ້.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 201)

ການກຳນົດແນວທາງ ແລະ ບາດກ້າວເດີນ ຍາມໃດກໍຕ້ອງເລີ່ມຈາກຈຸດພິເສດຂອງສະພາບການຕົວຈິງ ແລະ ປັດໄຈພາຍໃນຂອງແຕ່ລະປະເທດ ໂດຍສົມທົບກັບສະພາບແວດລ້ອມສາກົນຂອງແຕ່ລະໄລຍະ ແຕ່ລະສະໄໝຕົວຈິງ, ແຕ່ບໍ່ແມ່ນຈົດກ່າຍ, ເຮັດແບບກົນຈັກຕາຍຕົວຕາມຕົວແບບໃດໜຶ່ງທີ່ມີແລ້ວຂອງປະເທດອື່ນ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 327)

ອ່ານຕໍ່ສະບັບໜ້າ

## ກອງປະຊຸມຄັ້ງປະຖົມມະລຶກ ປິດລົງດ້ວຍຜົນສຳເລັດອັນຈົບງາມ



(ສພຊ) - ຕອນບ່າຍວັນທີ 27 ມີນານີ້, ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ໄດ້ປິດລົງດ້ວຍຜົນສຳເລັດອັນຈົບງາມ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານທອງລຸນ

ອ່ານຕໍ່ໜ້າ 4

## ຜົນກອງປະຊຸມຄັ້ງປະຖົມມະລຶກຂອງລັດຖະບານ



(ສພຊ) - ຕອນແລງວັນທີ 31 ມີນານີ້, ທ່ານ ຄຳຜາ ພົມມະສອນ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ(ຫສນຍ) ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນກອງປະຊຸມຄັ້ງປະຖົມມະລຶກຂອງລັດຖະບານຊຸດທີ X ເຊິ່ງກອງປະຊຸມດັ່ງກ່າວໄດ້ໄຂຂຶ້ນໃນຕອນເຊົ້າວັນທີ 30 ມີນາແລະ ອັດລົງໃນຕອນສວາຍວັນທີ 31 ມີນາ 2026 ທີ່ສຳນັກງານນາຍົກລັດຖະມົນຕີ ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດ

ອ່ານຕໍ່ໜ້າ 4

## ມອບ-ຮັບໜ້າທີ່ຫົວໜ້າຫ້ອງວ່າການ ແລະ ປະທານກຳມາທິການ ສພຊ




ອ່ານຕໍ່ໜ້າ 8

## ກອງປະຊຸມຄັ້ງປະຖົມມະລຶກ ອອກມະຕິ 20 ສະບັບ



(ສພຊ) - ຕອນບ່າຍວັນສຸກທີ 27 ມີນານີ້, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ (ສພຊ) ຊຸດທີX ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມຄັ້ງນີ້ດຳເນີນຂຶ້ນຢ່າງເປັນທາງການນັບແຕ່ວັນທີ 23-27 ມີນາ 2026 ໂດຍໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດຕາມລັດຖະທຳມະນູນ ແລະ ກົດໝາຍກຳນົດ ດັ່ງນີ້:

1. ຮັບຟັງລາຍງານຜົນສຳເລັດຂອງການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດ

ອ່ານຕໍ່ໜ້າ 12

## ແຕ່ງຕັ້ງຮອງປະທານກຳມາທິການ, ຮອງຫົວໜ້າຫ້ອງວ່າການ ແລະ ສສຊ ປະຈຳການ



(ສພຊ) - ຕອນສວາຍວັນທີ 27 ມີນານີ້, ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ໂດຍການເປັນປະທານຂອງທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ທ່ານ ນາງ ສູນທອນ ໄຊ

ອ່ານຕໍ່ໜ້າ 2



8 ອາຫານທາດເຫຼັກ... (ໜ້າ 9)



ຈີນ ເຜີຍແຜ່ບົດລາຍງານ... (ໜ້າ 10)

ຕ່ຳແໜ່ງທາຍ... (ໜ້າ 12)

## ຊົມເຊີຍຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ຢ່າງສຸດໃຈ!

## ມອບ-ຮັບໜ້າທີ່ປະທານກຳມາທິການກົດໝາຍແລະຍຸຕິທຳ




(ສພຊ) - ວັນທີ 31 ມີນາ 2026 ໄດ້ມີພິທີມອບ-ຮັບໜ້າທີ່ຢ່າງເປັນທາງການລະຫວ່າງທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ ສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ທ່ານ ນາງ ທຸມມາລີ ວົງພະຈັນ ກຳມະການສູນກາງພັກ, ປະທານກຳມາທິການກົດໝາຍ ແລະ ຍຸຕິທຳ ສະພາແຫ່ງຊາດ ຊຸດທີ X ໂດຍມີທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ທ່ານ ກອງແກ້ວ ໄຊສິງຄາມ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ບັນດາທ່ານຄະນະປະຈຳສະພາແຫ່ງຊາດແລະຮອງປະທານກຳມາທິການ ສພຊ ຊຸດທີ IX ແລະ ຊຸດທີ X ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມເປັນສັກຂີພະຍານ.

ໃນພິທີ, ໄດ້ຮັບຟັງການຜ່ານມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ສະບັບເລກທີ 03/ສພຊ, ລົງວັນທີ 23 ມີນາ 2026 ວ່າດ້ວຍການຮັບຮອງເອົາກົງຈັກສະພາແຫ່ງຊາດ, ແຕ່ງຕັ້ງປະທານກຳມາທິການແລະຫົວໜ້າຫ້ອງວ່າການສະພາແຫ່ງຊາດ ພ້ອມທັງຮັບຟັງການລາຍງານຫຍໍ້ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງກຳມາທິການກົດໝາຍ ໃນໄລຍະ 5 ປີຜ່ານມາ; ຫຼັງຈາກນັ້ນ, ໄດ້ມີການລົງລາຍເຊັນໃສ່ບົດບັນທຶກມອບ-ຮັບໜ້າທີ່ລະຫວ່າງປະທານກຳມາທິການຜູ້ເກົ່າ ແລະ ຜູ້ໃໝ່. ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການກົດໝາຍ ແລະ ຍຸຕິທຳ ຜູ້ໃໝ່ ໄດ້ຂຶ້ນກ່າວຮັບໜ້າທີ່ ແລະ ປະຕິຍານວ່າ ຈະສືບຕໍ່ເອົາໃຈໃສ່ສຶກສາອົບຮົມການເມືອງ-ນຳພາແນວຄິດ ໃຫ້ແກ່ສະມາຊິກພັກ-ພະນັກງານ, ຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງ ຂອງສູນກາງພັກ, ຂອງອົງຄະນະພັກສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ໃຫ້ເຂົ້າສູ່ຊີວິດຕົວຈິງ; ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ໃຫ້ມີຄວາມຮູ້ຄວາມສາມາດ ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານເປັນເສນາທິການໃຫ້ແກ່ກຳມາທິການ ກໍຄືສະພາແຫ່ງຊາດມີຄຸນນະພາບສູງຂຶ້ນ; ເອົາໃຈໃສ່ປັບປຸງກົນໄກປະສານງານລະຫວ່າງກຳມາທິການກົດໝາຍ ແລະ ຍຸຕິທຳ ກັບກຳມາທິການຂອງສະພາແຫ່ງຊາດ, ຫ້ອງວ່າການສະພາແຫ່ງຊາດ, ບັນດາກະຊວງ, ອົງການ ເປັນຕົ້ນ: ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສູດ, ອົງການກວດກາແຫ່ງລັດ, ຫ້ອງວ່າການສຳນັກງານປະທານປະເທດ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກະຊວງຍຸຕິທຳ, ກະຊວງປ້ອງກັນຄວາມສະຫງົບ ແລະພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມກົມກຽວ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນເພື່ອຮັບປະກັນໃຫ້ການເຄື່ອນໄຫວມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ.

ໂອກາດນີ້, ທ່ານ ກອງແກ້ວ ໄຊສິງຄາມ ຜູ້ຊີ້ນຳກຳມາທິການກົດໝາຍ ແລະ ຍຸຕິທຳ ມີຄຳເຫັນໂອ້ລົມຕໍ່ພິທີ ໂດຍທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການປະຕິບັດໜ້າທີ່ຂອງປະທານກຳມາທິການກົດໝາຍ ສະພາແຫ່ງຊາດ ຊຸດທີ IX ທີ່ຍາດໄດ້ຜົນງານຫຼາຍດ້ານຕະຫຼອດໄລຍະ 5 ປີຜ່ານມາ ແລະ ໄດ້ມີຄຳເຫັນເນັ້ນຕື່ມວ່າການປັບປຸງສັບຊ້ອນບຸກຄະລາກອນເຂົ້າໃນຕຳແໜ່ງສຳຄັນຂອງສະພາແຫ່ງຊາດຄັ້ງນີ້ ແມ່ນເພື່ອສືບຕໍ່ນຳພາ-ຊີ້ນຳວຽກງານຂອງສະພາແຫ່ງຊາດ ຊຸດທີ X ໃຫ້ດຳເນີນໄປຢ່າງປົກກະຕິ ແລະ ຕໍ່ເນື່ອງ ຮັບປະກັນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ, ການຈັດຕັ້ງປະຕິບັດມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດທີX ເຂົ້າໃນການເຄື່ອນໄຫວວຽກງານອັນລະອຽດແຕ່ລະໄລຍະຂອງກຳມາທິການກົດໝາຍ ແລະ ຍຸຕິທຳ ພ້ອມທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດ, ນຳເອົາຜົນປະໂຫຍດມາສູ່ປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ.

## ມອບ-ຮັບເງິນສະໜັບສະໜູນ ກອງປະຊຸມຄັ້ງປະຖົມມະລຶກ




(ສພຊ) - ວັນທີ 1 ເມສານີ້ ໄດ້ມີພິທີມອບ-ຮັບເງິນສະໜັບສະໜູນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ມູນຄ່າ 318 ລ້ານກວ່າກີບ, ຕາງໜ້າມອບໂດຍທ່ານ ສີວິໄລ ພົມມະຈັກ ຜູ້ອຳນວຍການທະນາຄານພົງສະຫວັນ ແລະຕາງໜ້າຮັບໂດຍທ່ານນາງ ດຣ. ວິພາວັນ ພົມວິຫານ ປະທານກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ທ່ານ ນາງ ດຣ. ວິພາວັນ ພົມວິຫານ ໄດ້ກ່າວສະແດງຄວາມຂອບໃຈແລະ ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ເພື່ອຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ ແລະ ອຸປະຖຳຄັ້ງນີ້.

**(ນາງ ອາລິນ ສຸພົມມະປະດິດ)**



## ແຕ່ງຕັ້ງ...

(ຕໍ່ຈາກໜ້າ 1)

ຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຂຶ້ນຜ່ານມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງຮອງປະທານກຳມາທິການ, ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳການ ດັ່ງນີ້:

- ຮອງປະທານກຳມາທິການ ຈຳນວນ 13 ທ່ານ, ຍິງ 3 ທ່ານ ຄື:

1. ທ່ານ ສົງຄຳ ວົງພະຈັນ ສສຊ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ເປັນຮອງປະທານກຳມາທິການກົດໝາຍ ແລະ ຍຸຕິທຳ;

2. ທ່ານ ພູທອນ ວໍລະເພັດ ສສຊ ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ເປັນຮອງປະທານກຳມາທິການກົດໝາຍ ແລະ ຍຸຕິທຳ;

3. ທ່ານ ນາງ ພອນເພັດ ອຸ່ນແກ້ວ ສສຊ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ເປັນຮອງປະທານກຳມາທິການກົດໝາຍ ແລະ ຍຸຕິທຳ;

4. ທ່ານ ນາງ ວິໄຊ ສຣິດທິຣາດ ສສຊ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ເປັນຮອງປະທານກຳມາທິການເສດຖະກິດແລະການເງິນ;

5. ທ່ານ ອາຄົມ ປຣະເສີດ ສສຊ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ເປັນຮອງປະທານກຳມາທິການເສດຖະກິດ ແລະ ການເງິນ;

6. ທ່ານ ແສນສັກ ສຸລິສັກ ສສຊ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ເປັນຮອງປະທານກຳມາທິການເສດຖະກິດ ແລະ ການເງິນ;

7. ທ່ານ ແກ້ວຈະເລີນ ເຊ່ຍຢີ້ງຢ່າງ ສສຊ ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ເປັນຮອງປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ;

8. ທ່ານ ນາງ ວິລະວອນ ພັນທະວົງສສຊປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ເປັນຮອງປະທານກຳມາທິການວັດທະນະທຳ-ສັງຄົມແລະຊົນເຜົ່າ;

9. ທ່ານ ກໍລະກັນ ພົມມະວົງ ສສຊ ປະຈຳເຂດເລືອກຕັ້ງທີ2ແຂວງຜົ້ງສາລີເປັນຮອງປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ;

10. ທ່ານ ພົຈວ. ແສງທອງ ທຳມະເທວາ ສສຊ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ເປັນຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

11. ທ່ານ ພົຈວ. ຄຳແຝງ ວັນດີໄຊ ສສຊ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ເປັນຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

12. ທ່ານ ເພັດລາ ທັນທະວົງສາສສຊປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ເປັນຮອງປະທານກຳມາທິການການຕ່າງປະເທດ;

13. ທ່ານ ໂພສີ ເຕັມເມລາດ ສສຊ ປະຈຳເຂດເລືອກຕັ້ງທີ18ແຂວງໄຊສົມບູນເປັນຮອງປະທານກຳມາທິການການຕ່າງປະເທດ.

- ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ຈຳນວນ 4 ທ່ານ ຄື:

1. ທ່ານ ບຸນທັນ ບຸນວິໄລ ສສຊ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ;

2. ທ່ານ ວຽງແກ້ວ ວັນນະຈັກ;

3. ທ່ານ ຄຳສະໄໝ ສຳມາວົງ;

4. ທ່ານ ເຂັມພອນ ອາໂນໄທ.

- ສສຊ ປະຈຳການຢູ່ກຳມາທິການຕ່າງໆ ຈຳນວນ 5 ທ່ານ, ຍິງ 3 ທ່ານ ຄື:

1. ທ່ານ ສາຍທອງ ພົມມະວົງ ສສຊ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ເປັນ ສສຊ ປະຈຳການຢູ່ກຳມາທິການເສດຖະກິດ ແລະ ການເງິນ;

2. ທ່ານ ນາງ ກັນທິນາ ປ້ານອິນທອນ ສສຊ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ເປັນ ສສຊ ປະຈຳການຢູ່ກຳມາທິການກົດໝາຍ ແລະ ຍຸຕິທຳ;

3. ທ່ານ ນາງ ປານຄຳ ຂະຫຍອງເອກ ສສຊ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ເປັນ ສສຊ ປະຈຳການຢູ່ກຳມາທິການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ;

4. ທ່ານ ໄຊປັນຍາ ພົມວິຫານ ສສຊ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ເປັນ ສສຊ ປະຈຳການຢູ່ກຳມາທິການການຕ່າງປະເທດ;

5. ທ່ານ ນາງ ແສງມະນີ ຢາທໍ່ຕູ້ ສສຊ ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ເປັນ ສສຊ ປະຈຳການຢູ່ກຳມາທິການເສດຖະກິດ ແລະ ການເງິນ.

# ມອບ-ຮັບໜ້າທີ່ປະທານກຳມາທິການການຕ່າງປະເທດ




(ສພຊ) - ວັນທີ 30 ມີນາ 2026 ໄດ້ມີພິທີມອບ-ຮັບໜ້າທີ່ຢ່າງເປັນທາງການ ລະຫວ່າງທ່ານ ປອ. ສັນຍາ ປຣະເສີດປະທານກຳມາທິການການຕ່າງປະເທດ ສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ທ່ານ ໂພໄຊ ໄຂຄຳພິທູນ ກຳມະການສູນກາງພັກ, ປະທານກຳມາທິການການຕ່າງປະເທດ ສະພາແຫ່ງຊາດ ຊຸດທີ X ໂດຍມີທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ບັນດາທ່ານຄະນະປະຈຳສະພາແຫ່ງຊາດ ແລະຮອງປະທານກຳມາທິການ ສພຊ ຊຸດທີ IX ແລະ ຊຸດທີ X ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ໃນພິທີ, ໄດ້ຮັບຟັງການຜ່ານມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ສະບັບເລກທີ 03/ສພຊ, ລົງວັນທີ 23 ມີນາ 2026 ວ່າດ້ວຍການຮັບຮອງເອົາກົງຈັກສະພາແຫ່ງຊາດ, ແຕ່ງຕັ້ງປະທານກຳມາທິການແລະຫົວໜ້າຫ້ອງວ່າການສະພາແຫ່ງຊາດ ພ້ອມທັງຮັບຟັງການລາຍງານຫຍໍ້ກ່ຽວກັບການປະຕິບັດໜ້າທີ່ວຽກງານການຕ່າງປະເທດຂອງ ສພຊ ໃນໄລຍະ 5 ປີຜ່ານມາ ແລະ ຄາດຄະເນທິດທາງແຜນການແຕ່ນີ້ຮອດປີ 2030 ຂອງກຳມາທິການການຕ່າງປະເທດ; ຫຼັງຈາກນັ້ນ, ກໍໄດ້ມີການລົງລາຍເຊັນໃສ່ບົດບັນທຶກມອບ-ຮັບໜ້າທີ່ລະຫວ່າງປະທານກຳມາທິການຜູ້ເກົ່າ ແລະ ຜູ້ໃໝ່.

ໃນຕອນທ້າຍ, ທ່ານປອ. ນາງ ສູນທອນ ໄຊຍະຈັກ ມີຄຳເຫັນໂອ້ລົມ ໂດຍໄດ້ກ່າວວ່າ: ການມອບ-ຮັບໜ້າທີ່ຄັ້ງນີ້ ແມ່ນການສືບຕໍ່ປັບປຸງສັບຊ້ອນບຸກຄະລາກອນເຂົ້າໃນຕຳແໜ່ງສຳຄັນຂອງສະພາແຫ່ງຊາດ ທັງເປັນການສືບຕໍ່ນຳພາ-ຊີ້ນຳວຽກງານກຳມາທິການການຕ່າງປະເທດໃຫ້ດຳເນີນໄປຢ່າງປົກກະຕິ ແລະ ຕໍ່ເນື່ອງ ເພື່ອຮັບປະກັນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ການຈັດຕັ້ງປະຕິບັດມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ທີ່ໄດ້ຮັບຮອງເອົາການແຕ່ງຕັ້ງປະທານ, ຮອງປະທານກຳມາທິການການຕ່າງປະເທດ ຊຸດທີ X ເຂົ້າໃນການເຄື່ອນໄຫວວຽກງານຂອງກົງຈັກສະພາແຫ່ງຊາດ ໃຫ້ໄດ້ຮັບຜົນສຳເລັດ, ນຳເອົາຜົນປະໂຫຍດມາສູ່ປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ; ພ້ອມນັ້ນ, ທ່ານຍັງສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານອັນພົ້ນເດັ່ນທີ່ກຳມາທິການການຕ່າງປະເທດສະພາແຫ່ງຊາດ ຊຸດທີ IX ຍາດມາໄດ້ໃນຕະຫຼອດໄລຍະ 5 ປີຜ່ານມາ.




# ກະກຽມຄວາມພ້ອມໃຫ້ຕາງໜ້າ AIPA ເຂົ້າຮ່ວມ ກອງປະຊຸມສຸດຍອດລັດຖະສະພາໂລກ ຄັ້ງທີ 3



(ສພຊ) - ວັນທີ 30 ມີນາຜ່ານມາ, ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ກໍລະກັນ ພິມມະວົງ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ ໄດ້ເດີນທາງເຂົ້າຮ່ວມກອງປະຊຸມຂອງລັດຖະສະພາພາກພື້ນເພື່ອກະກຽມຄວາມພ້ອມໃຫ້ຕາງໜ້າສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ເຂົ້າຮ່ວມກອງປະຊຸມສຸດຍອດລັດຖະສະພາໂລກ ຄັ້ງທີ 3 ເຊິ່ງຈະຈັດຂຶ້ນໃນລະຫວ່າງວັນທີ 16-17 ມິຖຸນາ 2026 ທີ່ ສາທາລະນະລັດອາຟຣິກາໃຕ້ພາຍໃຕ້ຫົວຂໍ້ "ຕ້ານໄພອຶດຫິວ ແລະ ການຂາດສານອາຫານ", ກອງປະຊຸມຂອງລັດຖະສະພາພາກພື້ນຄັ້ງນີ້ໄດ້ຈັດຂຶ້ນທີ່ນະຄອນຫຼວງຈາກາຕາ ປະເທດອິນໂດເນເຊຍ ໂດຍມີຄະນະຜູ້ແທນຈາກ 8 ປະເທດສະມາຊິກໄອປາ ເຂົ້າຮ່ວມ.

ກອງປະຊຸມໄດ້ເປີດຂຶ້ນໂດຍການແນະນຳໃຫ້ເຫັນພາບລວມຂອງກອງປະຊຸມສຸດຍອດລັດຖະສະພາໂລກ ວ່າດ້ວຍການຕ້ານໄພອຶດຫິວ ແລະ ການຂາດສານອາຫານ ໂດຍທ່ານ ກິວເຣີເມເບຣດີ(GuilhermeBrady) ຫົວໜ້າ PSUF ຂອງອົງການອາຫານແລະການກະເສດແຫ່ງສະຫະປະຊາຊາດ (Food and Agriculture Organization-FAO) ເຊິ່ງໄດ້ອະທິບາຍຂໍ້ມູນສະຖິຕິ, ຄວາມສຳຄັນ, ຂັ້ນຕອນ, ເປົ້າໝາຍ ແລະ ການຄາດຄະເນຜົນຂອງກອງປະຊຸມດັ່ງກ່າວ; ຫຼັງຈາກຮັບຟັງພາບລວມແລ້ວກໍໄດ້ດຳເນີນກອງປະຊຸມຕາມເວລາ ເຊິ່ງໄດ້ແບ່ງອອກເປັນ 4 ວາລະ ໃຫ້ບັນດາຄະນະຜູ້ແທນທີ່ເຂົ້າຮ່ວມ ໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນໃນແຕ່ລະຫົວຂໍ້ດັ່ງນີ້: 1) ສົ່ງເສີມຄວາມໝັ້ນຄົງທາງດ້ານອາຫານ ຜ່ານການພັດທະນາແບບມີສ່ວນຮ່ວມ ແລະ ຄວາມຍຸຕິທຳທາງສັງຄົມ, 2) ປຶກສາຫາລືໃນການພັດທະນາລະບົບກະສິກຳອາຫານທີ່ມີປະສິດທິພາບ, ກວ້າງຂວາງ, ທົນທານ ແລະ ຍືນຍົງ, 3) ສົ່ງເສີມການເຂົ້າເຖິງແລະການບໍລິໂພກອາຫານທີ່ມີປະໂຫຍດຕໍ່ສຸຂະພາບ, 4) ປຶກສາຫາລືແລກປ່ຽນທັດສະນະຂອງບັນດາປະເທດສະມາຊິກ ກ່ຽວກັບຮ່າງຂໍ້ສະເໜີການລາຍງານລະດັບໂລກໃນວາລະສຸດທ້າຍຂອງກອງປະຊຸມ. ພ້ອມກັນນັ້ນ, ປະທານກອງປະຊຸມຍັງໄດ້ຍົກໃຫ້ເຫັນຄວາມສຳຄັນຂອງກອງປະຊຸມທີ່ໄດ້ເຕົ້າໂຮມຜູ້ແທນຈາກສະມາຊິກ AIPA ເພື່ອເສີມສ້າງການປະສານງານໃນພາກພື້ນ ແລະ ກຳນົດວິທີການທີ່ສອດຄ່ອງກັນໃນການແກ້ໄຂບັນຫາຄວາມອຶດຫິວ, ການຂາດສານອາຫານ ແລະ ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານໃນພາກພື້ນອາຊີຕາເວັນອອກສຽງໃຕ້ ພ້ອມທັງເນັ້ນໜັກເຖິງບົດບາດຂອງລັດຖະສະພາ ໃນການອອກກົດໝາຍ, ການຕິດຕາມກວດກາ ແລະ ການຈັດສັນຊັບພະຍາກອນ.

ການເຂົ້າຮ່ວມຄັ້ງນີ້, ທ່ານ ກໍລະກັນ ພິມມະວົງ ມີຄຳເຫັນໃນວາລະທີສອງຂອງກອງປະຊຸມ ເຊິ່ງໄດ້ຊີ້ໃຫ້ເຖິງການພັດທະນາລະບົບກະສິກຳອາຫານທີ່ມີປະສິດທິພາບ, ປົກຄຸມ, ມີຄວາມຍືດຢຸ່ນ ແລະ ຍືນຍົງ; ຮຽກຮ້ອງໃຫ້ສະມາຊິກໄອປາໃຊ້ວິທີການທີ່ສົມດຸນໃນການແກ້ໄຂບັນຫາທີ່ທ້າທາຍດ້ານໂຄງສ້າງ ໃນຂະນະທີ່ນຳໃຊ້ທ່າແຮງທຳມະຊາດ ໂດຍອີງໃສ່ນະໂຍບາຍທີ່ສອດຄ່ອງກັນ, ການມີສ່ວນຮ່ວມຂອງລັດຖະສະພາທີ່ເຂັ້ມແຂງ ແລະ ການຮ່ວມມືໃນພາກພື້ນທີ່ດີຂຶ້ນ. ທ່ານຍັງເນັ້ນໜັກເຖິງຄວາມສຳຄັນຂອງການລົງທຶນຢ່າງຕໍ່ເນື່ອງໃນພື້ນຖານໂຄງລ່າງ, ເຕັກໂນໂລຊີ ແລະ ການເຊື່ອມຕໍ່, ຄຽງຄູ່ກັບມາດຕະການຮອບດ້ານທີ່ເປັນປະໂຫຍດໃນການຍົກລະດັບຄວາມເປັນຢູ່ໃນເຂດຫ່າງໄກ ແລະ ກຸ່ມທີ່ມີຄວາມບອບບາງ; ເນັ້ນໜັກເຖິງຄຸນຄ່າຂອງການຮ່ວມມືຂອງອາຊຽນ ໃນການສົ່ງເສີມການພັດທະນາກະສິກຳທີ່ມີຄວາມຮັບຜິດຊອບ ພ້ອມທັງກ່າວເຖິງຄວາມມຸ່ງໝັ້ນຂອງ ສປປລາວ ໃນການພັດທະນາລະບົບກະສິກຳດ້ານສະບຽງອາຫານໃຫ້ເປັນພື້ນຖານຂອງການພັດທະນາແຫ່ງຊາດແລະການຮ່ວມມືໃນພາກພື້ນ ກໍຄືສະພາແຫ່ງຊາດ ໃນການເພີ່ມທະວີການສ້າງ ແລະ ປັບປຸງກົດໝາຍໃຫ້ແທດເໝາະກັບການຮ່ວມມືກັບບັນດາລັດຖະສະພາພາກພື້ນ ແລະ ສາກົນ ໃຫ້ດີຂຶ້ນກວ່າເກົ່າ ເພື່ອຮັບປະກັນຜົນປະໂຫຍດທີ່ຍືນຍົງ, ຍຸຕິທຳ ແລະ ຍືນຍົງສຳລັບທຸກຄົນ.

# ນັກສຶກສາສື່ສານມວນຊົນ ທັດສະນະ ແລະ ແລກປ່ຽນວຽກງານສື່ ກັບ ສພຊ



(ສພຊ) - ຕອນສວາຍວັນທີ 30 ມີນານີ້, ກົມສື່ມວນຊົນຮ່ວມກັບຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ (ສພຊ) ໄດ້ຕ້ອນຮັບ ແລະ ນຳພາຄູ-ອາຈານ ແລະ ນັກສຶກສາ ຈາກພາກວິຊາສື່ສານມວນຊົນຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ ຈຳນວນ 40 ຄົນ ເຊິ່ງນຳໂດຍທ່ານ ອາຈານ ນາງ ປາລິດຖາ ລັດສິມມາ ຮອງຫົວໜ້າພາກວິຊາສື່ສານມວນຊົນທີ່ມາທັດສະນະສຶກສາຢ້ຽມຊົມຫ້ອງມູນເຊື້ອ, ຫ້ອງປະຊຸມໃຫຍ່ ສພຊ ແລະ ງານວາງສະແດງສະພາແຫ່ງຊາດ ຊຸດທີ I - ຊຸດທີ X.

ໃນການມາທັດສະນະຄັ້ງນີ້, ຍັງໄດ້ມີການແລກປ່ຽນບົດຮຽນກ່ຽວກັບວຽກງານສື່ມວນຊົນ ລະຫວ່າງກົມສື່ມວນຊົນ ຫ້ອງວ່າການສະພາແຫ່ງຊາດ ກັບ ຄູ-ອາຈານ ແລະ ນັກສຶກສາ ຈາກພາກວິຊາສື່ສານມວນຊົນ ໂດຍການເຂົ້າຮ່ວມຂອງທ່ານ ວິລະພັດພາບ ວິໄຊ ຮອງຫົວໜ້າກົມສື່ມວນຊົນ ເຊິ່ງມີຄະນະພະແນກ ແລະ ວິຊາການຂອງສອງພາກສ່ວນເຂົ້າຮ່ວມ.

ຮອງຫົວໜ້າກົມສື່ມວນຊົນ ໄດ້ລາຍງານໂດຍຫຍໍ້ໃຫ້ຊາບກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່; ໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ; ການປະຕິບັດໜ້າທີ່ວຽກງານຂອງກົມໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ. ຈາກນັ້ນ, ໄດ້ມີການຖາມ-ຕອບ, ແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາໃນບັນຫາທີ່ນັກສຶກສາມີຄວາມສົນໃຈ ພ້ອມທັງຮັບຟັງປະສົບການໃນການປະຕິບັດວຽກງານຕົວຈິງ ໂດຍສະເພາະວຽກງານສື່ສິ່ງພິມ, ສື່ເອເລັກໂຕຣນິກ, ສື່ອອນລາຍ; ວຽກງານຫ້ອງມູນເຊື້ອ ແລະ ປະຫວັດສາດ ເພື່ອໃຫ້ຄູ-ອາຈານ ແລະ ນັກສຶກສາ ໄດ້ມີຄວາມຮັບຮູ້, ຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບວຽກງານສື່ມວນຊົນຂອງສະພາແຫ່ງຊາດ.

**(ນາງ ນິດຕາ ຄູນປາກດີ)**

# ມອບ-ຮັບໜ້າທີ່ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ




(ສພຊ)-ພິທີມອບ-ຮັບໜ້າທີ່ລະຫວ່າງທ່ານ ພົຕ. ວິງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ທ່ານ ພົຈວ. ສຸລິໄຊ ພິຈິດ ກຳມະການສຳຮອງສູນກາງພັກ, ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສພຊ ຊຸດທີ X ໄດ້ຈັດຂຶ້ນໃນຕອນບ່າຍວັນທີ 31 ມີນາຜ່ານມາ ເຊິ່ງມີທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ບັນດາທ່ານຄະນະປະຈຳສະພາແຫ່ງຊາດ, ຮອງປະທານກຳມາທິການແລະຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ຊຸດທີ IX ແລະ ຊຸດທີ X, ຜູ້ຕາງໜ້າຈາກກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ສະຫະພັນນັກຮົບເກົ່າລາວ ແລະ ແຂກຖືກເຊີນ ເຂົ້າຮ່ວມເປັນສັກຂີພະຍານ.

ໃນພິທີ, ໄດ້ຮັບຟັງການຜ່ານມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ສະບັບເລກທີ 03/ສພຊ, ລົງວັນທີ 23 ມີນາ 2026 ວ່າດ້ວຍການຮັບຮອງເອົາກົງຈັກສະພາແຫ່ງຊາດ, ແຕ່ງຕັ້ງປະທານກຳມາທິການແລະຫົວໜ້າຫ້ອງວ່າການສະພາແຫ່ງຊາດ ພ້ອມທັງຮັບຟັງການລາຍງານຫຍໍ້ກ່ຽວກັບການປະຕິບັດໜ້າທີ່ວຽກງານໃນໄລຍະ 5 ປີຜ່ານມາ ແລະ ຄາດຄະເນທິດທາງແຜນການແຕ່ນີ້ຮອດປີ 2030 ຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ຈາກນັ້ນ, ໄດ້ມີການລົງລາຍເຊັນໃສ່ປຶ້ມບັນທຶກມອບ-ຮັບໜ້າທີ່ລະຫວ່າງຜູ້ເກົ່າ ແລະ ຜູ້ໃໝ່.

ໃນພິທີມອບ-ຮັບໜ້າທີ່ດັ່ງກ່າວ, ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານ ກໍຄືຜົນສຳເລັດທີ່ການນຳຂອງກຳມາທິການຍາດມາໄດ້. ພ້ອມກັນນັ້ນ, ທ່ານໄດ້ເນັ້ນໜັກໃຫ້ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຈົ່ງໄດ້ສຸມໃສ່ການປະຕິບັດໜ້າທີ່ການເມືອງຂອງຕົນ, ປະຕິບັດຕາມມະຕິຂອງສະພາແຫ່ງຊາດໂດຍສະເພາະແມ່ນທິດທາງແຜນການຂອງສະພາແຫ່ງຊາດ ຊຸດທີ X ແລະ ບັນດາແຜນງານ, ໂຄງການທີ່ໄດ້ຮັບຮອງເອົາໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ໂດຍຫັນໃຫ້ເປັນແຜນການອັນລະອຽດຂອງຕົນ; ເປັນໃຈກາງປະສານສົມທົບທັງຢູ່ພາຍໃນສະພາແຫ່ງຊາດ ແລະ ຕິດຕາມຊຸກຍູ້ພາກສ່ວນກ່ຽວຂ້ອງຕ່າງໆ ກະກຽມດ້ານເນື້ອໃນໃຫ້ແກ່ການດຳເນີນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ; ສ້າງຄວາມເຂັ້ມແຂງໃຫ້ສະມາຊິກພັກ-ພະນັກງານ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ພາຍໃນກຳມາທິການ ຢ່າງເປັນລະບົບ, ຕໍ່ເນື່ອງ ຕາມແຜນລວມຂອງສະພາແຫ່ງຊາດ

**(ນາງ ສຸພາວັນ ທອມສະນິດ)**



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ, ບັນດາທ່ານການນຳຂັ້ນສູງ ແລະ ອະດີດການນຳຂັ້ນສູງຂອງພັກ-ລັດ, ທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ, ບັນດາທ່ານສະມາຊິກລັດຖະບານ, ສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 18 ເຂດເລືອກຕັ້ງທົ່ວປະເທດ ແລະ ແຂກຖືກເຊີນ.

ໃນວາລະສຸດທ້າຍຂອງການປະຊຸມ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ຄະນະປະຈຳສະພາແຫ່ງຊາດ, ຫົວໜ້າກອງເລຂານຸການກອງປະຊຸມ ໄດ້ຂຶ້ນຜ່ານມະຕິສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ແລະ ມະຕິສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການພິຈາລະນາ, ຮັບຮອງເອົາດ້ານຫຼັກການໂຄງການລົງທຶນກໍ່ສ້າງເສັ້ນທາງລົດໄຟ ແຕ່ຕົວເມືອງທ່າແຂກ ແຂວງຄຳມ່ວນ ຫາ ມູຢ່າ ຊາຍແດນລາວ-ຫວຽດນາມ ດ້ວຍຮູບແບບ BOT; ຈາກນັ້ນ, ບັນດາທ່ານ ສສຊ ໄດ້ສຸມໃສ່ປະກອບຄຳຄິດຄຳເຫັນແລະລົງຄະແນນສຽງຮັບຮອງເອົາ 2 ມະຕິດັ່ງກ່າວ.

ຕອນທ້າຍກອງປະຊຸມ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວສູນທອນປິດກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ X ຢ່າງເປັນທາງການ.

**(ນາງ ອາລີນ ສຸພົມມະປະດິດ)**

## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 1)

ຖະມົນຕີ, ມີບັນດາຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນ ແລະ ພິຈາລະນາຕໍ່ບັນດາຫົວຂໍ້ທີ່ສຳຄັນຕ່າງໆ ເຊັ່ນ: ຮ່າງແຜນດຳເນີນງານຂອງລັດຖະບານ ຊຸດທີ X (2026-2030); ຮ່າງລະບຽບການແລະກົນໄກການເຮັດວຽກຂອງລັດຖະບານ ຊຸດທີ X; ຮ່າງຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບຂອງນາຍົກ-ຮອງນາຍົກລັດຖະມົນຕີ; ຮ່າງຂໍ້ຕົກລົງແບ່ງຄວາມຮັບຜິດຊອບ ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ລົງຊ່ວຍ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງທົ່ວປະເທດ; ບັນຊີໂຄງການລະດັບຊາດທີ່ເປັນການລົງທຶນຂອງລັດ; ບັນຊີໂຄງການລະດັບຊາດ ໄລຍະ 5 ປີ (2026-2030) ທີ່ດຶງດູດການລົງທຶນຈາກພາກເອກະຊົນ ແລະ ແຜນຜັນຂະຫຍາຍການປະຕິບັດນະໂຍບາຍ ແລະ ມາດຕະການສົ່ງເສີມລົດໄຟຟ້າ (EV) ກໍຄືການນຳໃຊ້ພະລັງງານທາງເລືອກອື່ນ ຢູ່ ສປປລາວ.

ຜ່ານການພິຈາລະນາບັນດາຫົວຂໍ້ດັ່ງກ່າວ, ກອງປະຊຸມໄດ້ຊີ້ນຳໃຫ້ຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ນຳໄປປັບປຸງຕາມຄຳເຫັນຂອງສະມາຊິກລັດຖະບານ ໃຫ້ສອດຄ່ອງກັບນະໂຍບາຍຂອງພັກ ແລະ ລັດຖະບານໂດຍສະເພາະມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X, ກົດໝາຍ ແລະ ລະບຽບການ ທີ່ໄດ້ປະກາດນຳໃຊ້ແລ້ວ ທັງແທດເໝາະກັບທ່າແຮງແລະເງື່ອນໄຂຕົວຈິງຂອງແຕ່ລະຂົງເຂດວຽກງານ-ແຕ່ລະທ້ອງຖິ່ນໃນແຕ່ລະໄລຍະ, ຈຳກັດໄດ້ຊ່ອງວ່າງການສວຍໂອກາດຕ່າງໆ, ຮັບປະກັນຄວາມຍືນຍົງ, ມີປະສິດທິພາບແລະປະສິດທິຜົນສູງ, ພ້ອມທັງນຳເອົາບັນດາຂໍ້ຄົງຄ້າງຕ່າງໆ ທີ່ໄດ້ຍົກຂຶ້ນໃນກອງປະຊຸມ ໄປຄົ້ນຄວ້າປັບປຸງແກ້ໄຂໃຫ້ມີການຫັນປ່ຽນດີຂຶ້ນ ແລະ ໄດ້ຮັບໝາກຜົນເປັນຮູບປະທຳຕົວຈິງຢ່າງຈະແຈ້ງ. ສະເພາະການແບ່ງວຽກຂອງນາຍົກ-ຮອງນາຍົກລັດຖະມົນຕີ, ມອບໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ປະສານສົມທົບກັບຫ້ອງວ່າການສູນກາງພັກ ເພື່ອໃຫ້ລັດຖະບານລາຍງານຂໍທິດຊີ້ນຳຈາກກອງປະຊຸມກົມການເມືອງ ຮ່ວມກັບຄະນະເລຂາທິການສູນກາງພັກຕື່ມ; ພ້ອມກັນນີ້, ກອງປະຊຸມໄດ້ມອບໝາຍໃຫ້ສະມາຊິກລັດຖະບານ ກໍຄືບັນດາກະຊວງ ແລະ ອົງການທຽບເທົ່າ ຮີບຮ້ອນລົງສົມທົບບັນດາແຂວງ ຕາມທີ່ໄດ້ແບ່ງຄວາມຮັບຜິດຊອບນັ້ນ ເພື່ອປຶກສາຫາລື ແລະ ເຮັດບົດບັນທຶກເປັນອັນລະອຽດ ກ່ຽວກັບກົນໄກເຮັດວຽກຮ່ວມລະຫວ່າງກະຊວງ-ອົງການປົກຄອງທ້ອງຖິ່ນ, ທ້ອງຖິ່ນ ທີ່ຕົນເອງຮັບຜິດຊອບ.

ສຳລັບແຜນວຽກຈຸດສຸມ 5 ປີ (2026-2030), ລັດຖະບານ ຊຸດທີ X ຈະຫັນເຂົ້າສູ່ "ການເວົ້າ ໃຫ້ໄປສູ່ການກະທຳຕົວຈິງ", ຕ້ອງເດັດດ່ຽວແກ້ໄຂສະພາບ "ເວົ້າຫຼາຍເຮັດໜ້ອຍ ຫຼື ບໍ່ເຮັດ; ເວົ້າມີວາທະສິນຈົບງາມ, ເປັນຕາຟັງ ແຕ່ເຮັດຫຍັງບໍ່ໄດ້ ຫຼື ບໍ່ໄດ້ເຮັດຫຍັງອອກມາໃຫ້ເປັນຜົນໄດ້ຮັບ ຫຼື ເກີດຜົນທີ່ສາມາດຈັບຕ້ອງໄດ້". ລັດຖະບານ ຈະເປັນເຈົ້າການ ແລະ ຕັ້ງໜ້າຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ແລະ ບັນດາມະຕິຂອງສະພາແຫ່ງຊາດ ວາງອອກດ້ວຍຄວາມຮັບຜິດຊອບສູງດັ່ງຄຳຂວັນທີ່ວ່າ: "ຍົກສູງຈິດໃຈມຸ່ງໝັ້ນພັດທະນາຢ່າງແຮງກ້າ, ຕັ້ງໜ້າສ້າງເສດຖະກິດເອກະລາດ ເປັນເຈົ້າຕົວເອງ, ນຳໃຊ້ທຸກທ່າແຮງຢ່າງມີປະສິດທິຜົນ, ພັດທະນາເສດຖະກິດ-ສັງຄົມຕາມທິດ ວ່ອງໄວ, ສີຂຽວ ແລະ ຍືນຍົງ".

ສະເພາະແຜນວຽກຈຸດສຸມຈຳນວນໜຶ່ງຂອງລັດຖະບານໃນເດືອນເມສາ 2026 ຈະສຸມໃສ່ປະຕິບັດທິດຊີ້ນຳຂອງກົມການເມືອງສູນກາງພັກກ່ຽວກັບການເພີ່ມທະວີແກ້ໄຂບັນຫານ້ຳມັນເຊື້ອໄຟໃນໄລຍະສະພາບເຄັ່ງຮ້ອນ ໂດຍຮີບຮ້ອນຈັດຕັ້ງຜັນຂະຫຍາຍຄຳສັ່ງ 40/ນຍ ໃຫ້ເປັນຮູບປະທຳ; ໃນໄລຍະວິກິດການລາຄານ້ຳມັນເຊື້ອໄຟ, ມອບໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ລົງເລິກຊີ້ນຳຕິດຕາມ, ຊຸກຍູ້ວຽກງານກະສິກຳໃຫ້ແທດເຖິງ, ມອບໃຫ້ກະຊວງປ້ອງກັນປະເທດສືບຕໍ່ປະຕິບັດໂຄງການ 4 ປູກ 4 ລ້ຽງ ໃຫ້ແຂງແຮງກວ່າເກົ່າ ເພື່ອບໍ່ໃຫ້ກະທົບຕໍ່ວຽກງານພະລາທິການຂອງກອງທັບ; ໃຫ້ສືບຕໍ່ສົ່ງເສີມການນຳໃຊ້ລົດໄຟຟ້າແລະລົດໂດຍສານສາທາລະນະ, ພ້ອມທັງເອົາໃຈໃສ່ຄຸ້ມຄອງການນຳເຂົ້າລົດໄຟຟ້າຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ. ໄລຍະສະຫຼອງບຸນປີໃໝ່ລາວ, ມອບໃຫ້ແຕ່ລະພາກສ່ວນກ່ຽວຂ້ອງ ປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ເພື່ອເຮັດໃຫ້ການສະຫຼອງບຸນປີໃໝ່ ເປັນໄປຕາມຮີດຄອງປະເພນີ, ຮັບປະກັນຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ໃນນີ້, ເອົາໃຈໃສ່ການຜະລິດສະບຽງອາຫານ, ການສະໜອງສິນຄ້າອຸປະໂພກ-ບໍລິໂພກ ໃຫ້ພຽງພໍກັບຄວາມຕ້ອງການຂອງສັງຄົມ; ຕິດຕາມ, ກວດກາ ແລະ ຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫຼາດ ແລະ ຄ່າບໍລິການຕ່າງໆຂອງຜູ້ປະກອບການ, ຫົວໜ່ວຍທຸລະກິດ ບໍ່ໃຫ້ມີການສວຍໂອກາດກັກຕຸນສິນຄ້າແລະປັບຂຶ້ນລາຄາແບບບໍ່ສົມເຫດສົມຜົນ; ຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນຂອບເຂດທົ່ວປະເທດ, ເອົາໃຈໃສ່ຈັດກຳລັງເວນຍາມຮັກສາຄວາມສະຫງົບ 24 ຊົ່ວໂມງ, ຕິດຕາມສະພາບອຸບັດເຫດແລະອັກຄີໄພຕ່າງໆ; ເພີ່ມທະວີການໂຄສະນາກ່ຽວກັບການສະຫຼອງປີໃໝ່ໃຫ້ຖືກຕ້ອງ, ສອດຄ່ອງກັບປະເພນີ ໂດຍເນັ້ນໃສ່ການບາສີສູ່ຂວັນປີໃໝ່ ຕາມເງື່ອນໄຂຄວາມສະດວກ, ເອົາໃຈໃສ່ຄຸ້ມຄອງບັນດາຜູ້ປະກອບການສະຖານທີ່ບັນເທີງ ໃຫ້ປະຕິບັດໂມງເປີດ-ປິດ ຢ່າງເຂັ້ມງວດ; ສຳລັບພາກລັດ ແມ່ນຫຼີກລ່ຽງການຈັດງານລ້ຽງລັກສະນະສິ້ນເປືອງງົບປະມານ, ຕ້ອງເປັນແບບຢ່າງໃນການປະຢັດ; ພ້ອມທັງຈະເລັ່ງປັບປຸງສ້ອມແປງເສັ້ນທາງຕ່າງໆ ໃຫ້ສຳເລັດກ່ອນລະດູຝົນຈະມາເຖິງ ໂດຍສະເພາະບັນດາເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງເຂົ້າຫາແຫຼ່ງທ່ອງທ່ຽວ. ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂ້ອງ ຕິດຕາມຊຸກຍູ້ການໃຫ້ຄວາມຊ່ວຍເຫຼືອຜູ້ໄດ້ຮັບຜົນກະທົບຈາກພາຍຸໝາກເຫັບຕົກ ຕາມທີ່ທ່ານເລຂາທິການໃຫຍ່-ປະທານປະເທດແລະນາຍົກລັດຖະມົນຕີ ໄດ້ຊີ້ນຳ ໃນໂອກາດລົງພື້ນທີ່ຕົວຈິງ ໂດຍສະເພາະດ້ານນະໂຍບາຍການສະໜອງວັດສະດຸອຸປະກອນ ເຊັ່ນ: ກະເບື້ອງມຸງຫຼັງຄາ, ແຮງງານສ້ອມແປງເຮືອນປະຊາຊົນ, ນະໂຍບາຍຄ່າໄຟຟ້າ, ນ້ຳປະປາ ແລະ ອື່ນໆ.

ກອງປະຊຸມຄັ້ງນີ້, ທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ໄດ້ມີຄຳເຫັນໂອລົມຊີ້ທິດເຍືອງທາງເນັ້ນໜັກໃຫ້ຄະນະລັດຖະບານ ຊຸດທີ X ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຈຳນວນໜຶ່ງ ກໍຄືແກ້ໄຂບັນຫາເຄັ່ງຮ້ອນທີ່ເກີດຂຶ້ນໃນສັງຄົມໃຫ້ເປັນຮູບປະທຳ.

**(ກົມປະຊາສຳພັນ ຫສນຍ)**

# ສູນທອນພິດປິດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X




(ສພຊ) - ໃນພິທີປິດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X, ທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ກ່າວສູນທອນພິດປິດກອງປະຊຸມວ່າ: ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ໄດ້ດຳເນີນມາເປັນເວລາ 5 ວັນ ດ້ວຍບັນຍາກາດອັນຟົດຟື້ນແລະເຄັ່ງຮ້ອນ ແຫ່ງການເສີມຂະຫຍາຍສິດປະຊາທິປະໄຕຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ໃນການພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນສຳຄັນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ໄດ້ມີຜົນສຳເລັດຢ່າງຈົບງາມ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງຄະນະກຳມະການເລືອກຕັ້ງລະດັບຊາດກ່ຽວກັບຜົນຂອງການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ເຊິ່ງໄດ້ຍົກໃຫ້ເຫັນເຖິງຜົນສຳເລັດໃນການຈັດຕັ້ງຜັນຂະຫຍາຍມະຕິກົມການເມືອງສູນການພັກ ເລກທີ 26/ກມສພ ວ່າດ້ວຍການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີV; ການເລືອກຕັ້ງໄດ້ດຳເນີນຢ່າງມີຜົນສຳເລັດຕາມແຜນການທີ່ວາງໄວ້, ຜູ້ມີສິດປ່ອນບັດເລືອກຕັ້ງໃນທົ່ວປະເທດ ໄດ້ນຳໃຊ້ສິດປະຊາທິປະໄຕຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍເລືອກຕັ້ງເອົາຕົວແທນຂອງຕົນເພື່ອປະຕິບັດສິດອຳນາດຂອງປະຊາຊົນຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນການພິຈາລະນາຮັບຮອງບັນຫາສຳຄັນພື້ນຖານຂອງປະເທດຊາດກໍຄືຂອງທ້ອງຖິ່ນ.

ກອງປະຊຸມໄດ້ດຳເນີນການເລືອກຕັ້ງຕຳແໜ່ງສຳຄັນຕ່າງໆຂອງອົງການອຳນາດແຫ່ງລັດ ເຊັ່ນ: ປະທານສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ; ເລືອກຕັ້ງປະທານປະເທດ, ຮອງປະທານປະເທດ, ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ປະທານອົງການກວດສອບແຫ່ງລັດ; ພ້ອມດຽວກັນນັ້ນ, ກອງປະຊຸມຍັງໄດ້ຮັບຮອງເອົາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ, ປະທານກຳມາທິການ ແລະ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ຮັບຮອງເອົາໂຄງປະກອບກົງຈັກຂອງລັດຖະບານ ແລະ ຮັບຮອງເອົາການແຕ່ງຕັ້ງສະມາຊິກລັດຖະບານ.

ການເລືອກຕັ້ງບຸກຄະລາກອນໃນຕຳແໜ່ງສຳຄັນຂອງລັດ, ການຮັບຮອງເອົາກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງອົງການລັດ ດັ່ງກ່າວມາຂ້າງເທິງນັ້ນ ເປັນບາດກ້າວສຳຄັນໃນການສືບຕໍ່ບູລະນະລະບົບອຳນາດລັດປະຊາທິປະໄຕປະຊາຊົນໃຫ້ໜັກແໜ້ນເຂັ້ມແຂງ ແລະ ເພື່ອສືບຕໍ່ຈັດຕັ້ງປະຕິບັດແຜນວຽກຂອງແຕ່ລະອົງການໃນ 5 ປີຕໍ່ໜ້າ ຕາມມະຕິກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ໂດຍຫັນເປັນແຜນງານ, ໂຄງການ, ກິດຈະກຳອັນລະອຽດຂອງແຕ່ລະຂະແໜງການ, ອົງການ ແລະ ຫັນເຂົ້າສູ່ຊີວິດສັງຄົມຢ່າງແທດເຖິງ ແລະປະຕິບັດໃຫ້ປາກົດເປັນຈິງ.

ກອງປະຊຸມໄດ້ຮັບຟັງການກ່າວອຳລາ ແລະ ກ່າວຮັບໜ້າທີ່ ຂອງທ່ານປະທານສະພາແຫ່ງຊາດ, ປະທານປະເທດ, ນາຍົກລັດຖະມົນຕີ ແລະ ການຮັບໜ້າທີ່ຂອງປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະປະທານອົງການກວດສອບແຫ່ງລັດ ທີ່ໄດ້ຮັບການເລືອກຕັ້ງໃນກອງປະຊຸມດ້ວຍຄະແນນສຽງສູງ ເຊິ່ງສະແດງເຖິງຄວາມມຸ່ງໝັ້ນ, ການຕັດສິນໃຈຂອງບັນດາທ່ານການນຳຂັ້ນສູງ ໃນການເພີ່ມທະວີຄວາມຮັບຜິດຊອບຕໍ່ການປະຕິບັດໜ້າທີ່ຂອງຕົນຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ແລະ ພ້ອມຈະເຮັດໜ້າທີ່ອັນສູດທີ່ມີກຽດນີ້ ຕາມການມອບໝາຍຂອງພັກ-ລັດ ແລະ ປະຊາຊົນ ເພື່ອພ້ອມກັນສຸມໃສ່ແກ້ໄຂສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໃນປັດຈຸບັນ ແລະ ສ້າງໃຫ້ມີການຫັນປ່ຽນໃໝ່ຢ່າງແຂງແຮງ, ນຳເອົາປະເທດຊາດກ້າວຂຶ້ນຢ່າງໜັກແໜ້ນຕາມທິດສັງຄົມນິຍົມ.

ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ກອງປະຊຸມສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ລັດຖະບານທີ່ໃນສະພາບການພາກພື້ນ, ສາກົນ ມີຄວາມສັບສົນ, ສະພາບພາຍໃນມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ແຕ່ໄດ້ເອົາໃຈໃສ່ຊີ້ນຳກະຊວງ, ອົງການ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດບັນດາຄາດໝາຍທີ່ໄດ້ກຳນົດໃນແຜນ 5 ປີຜ່ານມາ ແລະ ມີຜົນສຳເລັດຫຼາຍດ້ານອັນໄດ້ປະກອບສ່ວນເຮັດໃຫ້ເສດຖະກິດທົ່ວປະເທດມີສະຖຽນລະພາບ, ດ້ານການເມືອງໜັກແໜ້ນ, ສັງຄົມມີຄວາມສະຫງົບປອດໄພ, ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍມີໝາກຜົນດີຂຶ້ນເທື່ອລະກ້າວ.

ຄຽງຄູ່ກັບການຕີລາຄາຜົນສຳເລັດດັ່ງກ່າວ, ກອງປະຊຸມຍັງໄດ້ສະເໜີໃຫ້ລັດຖະບານເພີ່ມທະວີການຊີ້ນຳບັນຊາບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ສຸມໃສ່ຈັດຕັ້ງປະຕິບັດວິໄສທັດຮອດປີ2055, ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ 10 ປີ ແລະ ທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ເຊິ່ງໄດ້ກຳນົດບັນດາຄາດໝາຍ ແລະ 6 ເປົ້າໝາຍໃຫຍ່, ບັນດາວຽກຈຸດສຸມ ແລະ ໂຄງການບຸລິມະສິດ ເປັນຈຳນວນ 200 ກວ່າໂຄງການ; ພ້ອມກັນນັ້ນ, ໄດ້ກຳນົດມາດຕະການ, ນະໂຍບາຍ ແລະ ກົນໄກການຈັດຕັ້ງປະຕິບັດແບບບຸກທະລຸທີ່ແທດເໝາະກັບຕົວຈິງຕື່ມ ເຮັດໃຫ້ການຈັດຕັ້ງປະຕິບັດເກີດມີໝາກມີຜົນຕົວຈິງ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງດ້ານຫຼັກການໂຄງການລົງທຶນກໍ່ສ້າງເສັ້ນທາງລົດໄຟ ລາວ-ຫວຽດນາມ ຈາກຕົວເມືອງທ່າແຂກ ແຂວງຄຳມ່ວນ ຫາ ມູຢາ ຊາຍແດນລາວ-ຫວຽດນາມ ດ້ວຍຮູບແບບ BOT ເຊິ່ງເປັນໂຄງການຂະໜາດໃຫຍ່, ໂຄງການຍຸດທະສາດທີ່ສຳຄັນທາງດ້ານການເຊື່ອມໂຍງເຊື່ອມຈອດຕາມແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ ຕາມຍຸດທະສາດໃນການຫັນຈາກປະເທດບໍ່ມີຊາຍແດນຕິດກັບທະເລ ກາຍເປັນປະເທດເຊື່ອມໂຍງເຊື່ອມຈອດກັບພາກພື້ນ ແລະ ສາກົນ.

ກອງປະຊຸມສະແດງຄວາມຊົມເຊີຍຕໍ່ການຕັດໃຈຂອງລັດຖະບານຕໍ່ໂຄງການລົງທຶນທີ່ສຳຄັນດັ່ງກ່າວແລະເຫັນດີຮັບຮອງເອົາດ້ານຫຼັກການແບບມີເງື່ອນໄຂ; ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ກວດກາສັນຍາສຳປະທານໃຫ້ລະອຽດ, ຮັດກຸມ ເພື່ອໃຫ້ລັດໄດ້ຮັບຜົນປະໂຫຍດສູງ, ເອົາໃຈໃສ່ບັນຫາການຊົດເຊີຍຜົນກະທົບຈາກໂຄງການ, ການກຳນົດກົນໄກການຄຸ້ມຄອງແລະຕິດຕາມກວດກາການນຳເຂົ້າວັດສະດຸ-ອຸປະກອນ ແລະ ພາຫະນະນຳເຂົ້າຊົ່ວຄາວ, ການແບ່ງຄວາມຮັບຜິດຊອບລະຫວ່າງສູນກາງ ແລະ ທ້ອງຖິ່ນ ແລະ ບັນຫາອື່ນໆ ເພື່ອຈັດຕັ້ງປະຕິບັດໂຄງການດັ່ງກ່າວໃຫ້ປາກົດເປັນຈິງ, ນຳເອົາຜົນປະໂຫຍດທີ່ແທ້ຈິງໃຫ້ແກ່ປະຊາຊົນລາວບັນດາເຜົ່າ.

ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ເຊິ່ງກອງປະຊຸມໄດ້ສະເໜີໃຫ້ສອງອົງການດັ່ງກ່າວ ສືບຕໍ່ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງຂອງຕົນນັບແຕ່ສູນກາງລົງຮອດທ້ອງຖິ່ນໃຫ້ມີຄຸນນະພາບ, ມີຄວາມເຂັ້ມແຂງ ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດ, ຈັນຍາບັນ-ຈັນຍາທຳຂອງພະນັກງານໃນສອງອົງການດັ່ງກ່າວ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ ຈຳນວນ 15 ທ່ານ ທີ່ມີມາດຕະຖານ ແລະ ມີປະສົບການຕົວຈິງ ເຊິ່ງຈະເຮັດໃຫ້ການເຄື່ອນໄຫວວຽກງານຂອງສານປະຊາຊົນແຕ່ລະຂັ້ນ ມີບາດກ້າວຫັນປ່ຽນທີ່ດີຂຶ້ນ, ປະກອບສ່ວນເຂົ້າໃນການປັບປຸງລະບົບຍຸຕິທຳໃຫ້ໜັກແໜ້ນຂຶ້ນ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ປະຊາຊົນລາວບັນດາເຜົ່າ.

ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີຕໍ່ໜ້າ (2026-2030) ຂອງອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ. ກອງປະຊຸມສະແດງຄວາມຊົມເຊີຍຕໍ່ຜົນສຳເລັດໃນໄລຍະຜ່ານມາ ແລະ ເປັນເອກະພາບຕໍ່ທິດທາງ, ແຜນການເຄື່ອນໄຫວຂອງສອງອົງການໃນ 5 ປີຕໍ່ໜ້າ; ແຕ່ກອງປະຊຸມໄດ້ສະເໜີສອງອົງການເອົາໃຈໃສ່ຄົ້ນຄວ້າການສ້າງ, ປັບປຸງກົດໝາຍໃນຂົງເຂດຕົນຮັບຜິດຊອບ, ຊຸກຍູ້ການແກ້ໄຂຜົນກວດກາ, ຜົນການກວດສອບ, ເພີ່ມທະວີການກວດກາປົກກະຕິ, ກວດກາແຕ່ຫົວທີ່ບັນດາໂຄງການລົງທຶນຂະໜາດໃຫຍ່ ເພື່ອບໍ່ໃຫ້ເກີດຄວາມສ່ຽງຈະສ້າງໜີ້ສິນເພີ່ມ; ຖືເອົາການແກ້ໄຂຜົນການສອບເປັນເງື່ອນໄຂ ແລະ ບ່ອນອີງໃນການຕີລາຄາ ແລະ ປະເມີນຜົນໃນການປະຕິບັດໜ້າທີ່ຂອງອົງການ, ຂອງພະນັກງານ-ລັດຖະກອນ; ການບຳລຸງສ້າງພະນັກງານໃຫ້ມີຈັນຍາບັນ, ຈັນຍາທຳ ແລະ ມີຄວາມຊຳນານທາງດ້ານວິຊາສະເພາະ ເພື່ອຮັບໃຊ້ການປະຕິບັດວຽກງານຂອງສອງອົງການ ໃຫ້ມີຄວາມເຂັ້ມແຂງຂຶ້ນເລື້ອຍໆ.

ກອງປະຊຸມໄດ້ຮັບຟັງການລາຍງານແລະຮັບຮອງເອົາແຜນເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X ເພື່ອເປັນບ່ອນອີງພື້ນຖານໃຫ້ແກ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດໃນ 5 ປີຕໍ່ໜ້າ ໂດຍໄດ້ກຳນົດ 5 ແຜນງານ ແລະ 25 ໂຄງການ ເພື່ອຮັບປະກັນ ແລະ ຍົກສູງຄຸນນະພາບການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ໃຫ້ມີປະສິດທິພາບ, ມີປະສິດທິຜົນ.

ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X ຈຳນວນ 91 ສະບັບ, ສ້າງໃໝ່ 19 ສະບັບ, ປັບປຸງ 72 ສະບັບ ເຊິ່ງກວມເອົາຂົງເຂດການປົກຄອງ ແລະ ຍຸຕິທຳ, ຂົງເຂດເສດຖະກິດ, ວັດທະນະທຳ-ສັງຄົມ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ຊີ້ນຳກະຊວງ, ອົງການທີ່ກ່ຽວຂ້ອງ ເປັນເຈົ້າການແຕ່ຫົວທີໃນການສ້າງ ແລະ ປັບປຸງກົດໝາຍໃນຄວາມຮັບຜິດຊອບຂອງຕົນ ທັງເພີ່ມທະວີການປະສານສົມທົບກັບກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ເພື່ອກວດກາຄວາມພ້ອມຂອງເນື້ອໃນກົດໝາຍ ເຮັດໃຫ້ລັດປະຊາທິປະໄຕປະຊາຊົນ ເປັນລັດທີ່ປົກຄອງດ້ວຍກົດໝາຍ, ເປັນລັດຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ ເທື່ອລະກ້າວ.

ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ດຳເນີນມາຮອດນີ້ ໄດ້ສຳເລັດຕາມແຜນການກຳນົດໄວ້, ຜົນສຳເລັດຂອງກອງປະຊຸມໃນຄັ້ງນີ້ຖືເປັນໝາກຜົນແຫ່ງການເສີມຂະຫຍາຍສະຕິປັນຍາລວມໝູ່ຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ໄດ້ຍົກສູງຄວາມຮັບຜິດຊອບ ແລະ ຄວາມເປັນເຈົ້າການຂອງຕົນ ເຂົ້າໃນການຄົ້ນຄວ້າ ແລະ ພິຈາລະນາຮັບຮອງເອົາແຕ່ລະເນື້ອໃນສຳຄັນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ໄດ້ຮັບຜົນສຳເລັດເປັນຢ່າງດີ.

ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ໄດ້ສຳເລັດລົງແລ້ວ, ຂ້າພະເຈົ້າຂໍຮຽກຮ້ອງມາຍັງຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ ກໍຄືບັນດາທ່ານສະມາຊິກສະພາແຫ່ງຊາດທີ່ປະຈຳຢູ່ແຕ່ລະເຂດເລືອກຕັ້ງ ຈົ່ງໄດ້ຮີບຮ້ອນຈັດຕັ້ງຜັນຂະຫຍາຍເນື້ອໃນກອງປະຊຸມຄັ້ງນີ້ ໃຫ້ທົ່ວເຖິງທັນເວລາ; ຮຽກຮ້ອງມາຍັງທຸກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ, ປະຊາຊົນລາວບັນດາເຜົ່າແລະທຸກພາກສ່ວນເສດຖະກິດ ຈົ່ງໃຫ້ການຮ່ວມມື, ເປັນເຈົ້າການເຂົ້າຮ່ວມຈັດຕັ້ງປະຕິບັດມະຕິຂອງກອງປະຊຸມສະພາແຫ່ງຊາດ ໃຫ້ເກີດດອກອອກຜົນເປັນຈິງ.

ອ່ານຕໍ່ໜ້າ 8

# ຖອດຖອນບົດຮຽນການເລືອກຕັ້ງ ສສຊ ແລະ ສສຂ




(ສພຂ) - ວັນທີ 31 ມີນານີ້ ທີ່ຫ້ອງວ່າການແຂວງຄຳມ່ວນ, ໄດ້ມີກອງປະຊຸມສະຫຼຸບຖອດຖອນບົດຮຽນ ກ່ຽວກັບການກະກຽມແລະດຳເນີນການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V ໂດຍການເປັນປະທານຂອງທ່ານບຸນມີພິມມະສອນ ປະທານສະພາປະຊາຊົນແຂວງ; ມີບັນດາທ່ານຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລະ ຂັ້ນເມືອງ ເຂົ້າຮ່ວມ.

ທ່ານບຸນມີພິມມະສອນ ໄດ້ວ່າ: ກອງປະຊຸມຄັ້ງນີ້ເພື່ອຕີລາຄາຄືນ ແລະ ຖອດຖອນບົດຮຽນ ຈາກການດຳເນີນວຽກງານເລືອກຕັ້ງໃນໄລຍະຜ່ານມາ ໃຫ້ເລິກເຊິ່ງ ແລະ ຮອບດ້ານ ເພື່ອນຳໄປປັບປຸງພັດທະນາວຽກງານໃນຕໍ່ໜ້າ ເຊິ່ງຖືວ່າເປັນເຫດການການເມືອງທີ່ສຳຄັນຂອງຊາດ ແລະ ຂອງແຂວງ ພາຍໃຕ້ການນຳພາ-ຊີ້ນຳຂອງຄະນະພັກແຕ່ລະຂັ້ນ ນັບແຕ່ບາດກ້າວການກະກຽມຈົນຮອດມື້ລົງຄະແນນສຽງ ແລະ ການສັງລວມຜົນການເລືອກຕັ້ງ ໂດຍສະເພາະຜົນສຳເລັດທີ່ພົ້ນເດັ່ນທີ່ສຸດ ສາມາດປຸກລະດົມມວນຊົນອອກມາໃຊ້ສິດປະຊາທິປະໄຕໄດ້ລື່ນຄາດໝາຍຜູ້ມີໜ້າປ່ອນບັດຕົວຈິງ 2.46% (ຜູ້ມີໜ້າປ່ອນບັດຕົວຈິງຕາມແຜນ 240,935 ຄົນ, ມານຳໃຊ້ສິດປ່ອນບັດຕົວຈິງ 246,872 ຄົນ).

ພ້ອມນັ້ນ, ໄດ້ພ້ອມກັນແລກປ່ຽນຄຳຄິດ-ຄຳເຫັນຕໍ່ທິດທາງຄາດໝາຍແລະໜ້າທີ່ວຽກງານໃນຕໍ່ໜ້າ ເປັນຕົ້ນບັນຫາການເກັບກຳສະຖິຕິພົນລະເມືອງທີ່ເໜັງຕີງ, ການປະສານງານ ຫຼື ການນຳໃຊ້ງົບປະມານໃຫ້ສອດຄ່ອງກັບສະພາບເສດຖະກິດໃນປັດຈຸບັນ; ເພື່ອເປັນບ່ອນອີງໃຫ້ແກ່ການປັບປຸງກົນໄກການເຮັດວຽກ ຂອງ ສພຂ ຄຳມ່ວນ ໃນຊຸດໃໝ່ ໃຫ້ມີປະສິດທິພາບ ແລະ ຄວາມເຂັ້ມແຂງກວ່າເກົ່າ.

ວັນດຽວກັນ, ຍັງໄດ້ມີພິທີມອບ-ຮັບ ລົດຈັກ ໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ຈຳນວນ 10 ຄັນ, ລວມມູນຄ່າ 300 ລ້ານກວ່າກີບ. ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຫ້ອງການ ສສຂ ປະຈຳເຂດເລືອກຕັ້ງເມືອງ ໂດຍການກ່າວມອບຂອງທ່ານ ບຸນມີ ພິມມະສອນ ຕາງຮັບໂດຍຕາງໜ້າຄະນະກຳມະການເລືອກຕັ້ງເມືອງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ ເປັນສັກຂີພິຍານ.



# ກວດກາຮ່າງຂໍ້ຕົກລົງຂອງປະທານ ຄະນະກຳມະການປົກຄອງແຂວງຄຳມ່ວນ



(ສພຂ) - ວັນທີ 18 ມີນານີ້, ທີ່ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ, ຄະນະກຳມະການກວດການິຕິກຳໃຕ້ກົດໝາຍ ແລະ ຄະນະນຳຂອງ ສພຂ ຄຳມ່ວນ ໄດ້ດຳເນີນກອງປະຊຸມປຶກສາຫາລືເພື່ອກວດກາຮ່າງຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງແຂວງຄຳມ່ວນ ໂດຍການເປັນປະທານຂອງທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ຜູ້ຊີ້ນຳວຽກງານຂົງເຂດຍຸຕິທຳ ແລະ ປກຊ-ປກສ; ມີປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ປະທານຄະນະກຳມະການເສດຖະກິດ, ແຜນການ ແລະການເງິນ, ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ, ຮອງຫ້ອງວ່າການແຂວງ, ຕາງໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ; ຕາງໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ພະແນກຍຸຕິທຳແຂວງ, ຄະນະຮັບຜິດຊອບກອງເລຂາຊ່ວຍວຽກນິຕິກຳສະພາປະຊາຊົນແຂວງ, ຫົວໜ້າຂະແໜງ, ຮອງຂະແໜງສະພາປະຊາຊົນແຂວງ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງຮ່າງຂໍ້ຕົກລົງວ່າດ້ວຍການການຄຸ້ມນຳໃຊ້ທີ່ດິນຜັງເມືອງຕົວເມືອງທ່າແຂກ ແຂວງຄຳມ່ວນ; ບົດລາຍງານການປັບປຸງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງນຳໃຊ້ທີ່ດິນກະສິກຳຢູ່ແຂວງຄຳມ່ວນ ສະບັບເລກທີ 333/ຈຂ, ລົງວັນທີ 3 ມີນາ 2020; ບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍຂອງຕົວເມືອງທ່າແຂກ ສະບັບເລກທີ 376/ຈຂ, ລົງວັນທີ 20 ມີນາ 2023 ແລະ ໜັງສືສະເໜີຂອງປະທານຄະນະກຳມະການປົກຄອງແຂວງ ເພື່ອຄົ້ນຄວ້າພິຈາລະນາຮັບຮອງເອົາແຜນການສ້າງ, ປັບປຸງ ແລະ ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງແຂວງ ໄລຍະ 5 ປີ 2026–2030 ສະບັບເລກທີ 18/ຄບຂ, ລົງວັນທີ 10 ກຸມພາ 2026; ຈາກນັ້ນ, ກໍຜັດປ່ຽນກັນປະກອບຄຳຄິດຄຳເຫັນຕໍ່ບັນດານິຕິກຳເພື່ອເຮັດໃຫ້ບັນດາເນື້ອໃນມີປະສິດທິພາບ, ມີຄວາມໂປ່ງໃສ, ມີຄວາມເປັນເອກະພາບ ແລະ ແນໃສ່ຮັບປະກັນໃຫ້ເນື້ອໃນຂອງນິຕິກຳ ມີຄຸນນະພາບ, ຮັດກຸມ, ເຂົ້າໃຈງ່າຍ, ສາມາດຈັດຕັ້ງປະຕິບັດໄດ້, ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ກົດໝາຍ.



# ພິທີເປີດນຳໃຊ້ຂົວຫ້ວຍພະນອມ




(ສພຂ) - ວັນທີ 3 ເມສານີ້, ພິທີເປີດການນຳໃຊ້ຂົວຫ້ວຍພະນອມ ບ້ານໂພນຜາງ ເມືອງອາດສະພັງທອງ ແຂວງສະຫວັນນະເຂດຢ່າງເປັນທາງການ ໂດຍການເຂົ້າຮ່ວມຂອງທ່ານ ນາງ ດາວວອນ ໄຊສຸລຽງ ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ; ທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ ພ້ອມດ້ວຍການນຳຂອງເມືອງອາດສະພັງທອງ; ມີພະນັກງານຫຼັກແຫຼ່ງ, ອຳນາດການປົກຄອງກຸ່ມບ້ານໂພນຜາງ, ພຣະສົງ; ບັນດາແຂກຖືກເຊີນ ແລະ ເມືອງອ້ອມຂ້າງ ຕະຫຼອດຮອດພໍ່ແມ່ປະຊາຊົນເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານວິລາດເພັດສີແດງ ເລຂາຄະນະພັກຮາກຖານກຸ່ມບ້ານໂພນຜາງ ໄດ້ຜ່ານບົດລາຍງານການກໍ່ສ້າງຂົວຫ້ວຍພະນອມ ມີຄວາມຍາວ 33 ແມັດ, ກວ້າງ 4 ແມັດ ເປັນຂົວເສົາເບຕົງເສີມເຫຼັກ ແລະ ປູດ້ວຍໄມ້, ພະນັກເຫຼັກເລີ່ມກໍ່ສ້າງແຕ່ວັນທີ 22 ກຸມພາ 2025 ເປັນຕົ້ນມາ ນຳໃຊ້ງົບປະມານ 600 ລ້ານກວ່າກີບ ເປັນທຶນສົມທົບຈາກພາກລັດ ກໍຄືການນຳຂອງເມືອງ ກັບພໍ່ແມ່ປະຊາຊົນທັງ 6 ບ້ານ; ນອກນີ້ ທ່ານ ກົງແກ້ວ ມີວໍລະຈັກ ຍັງໄດ້ມອບເງິນຈຳນວນໜຶ່ງ ເພື່ອປະກອບສ່ວນໃນການພັດທະນາພື້ນຖານໂຄງລ່າງຂອງທ້ອງຖິ່ນອີກດ້ວຍ.

# ກອງປະຊຸມຮ່ວມລະຫວ່າງ ສພຂ ກັບ ອົງການປົກຄອງແຂວງສາລະວັນ




(ສພຂ) - ວັນທີ 25 ມີນານີ້ ທີ່ຫ້ອງປະຊຸມສະໂມສອນແຂວງ, ໄດ້ມີກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງ (ສພຂ) ກັບ ອົງການປົກຄອງແຂວງສາລະວັນ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ ຮອງປະທານສະພາປະຊາຊົນແຂວງແລະທ່ານປອ. ໂພສີ ແກ້ວສີພັນດອນ ຄະນະປະຈຳພັກແຂວງ ຮອງປະທານຄະນະກຳມະການປົກຄອງແຂວງ; ເຂົ້າຮ່ວມມີບັນດາຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ບັນດາທ່ານຄະນະປະຈຳ ສພຂ, ຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V ອ້ອມຂ້າງແຂວງ, ຫ້ອງວ່າການສະພາປະຊາຊົນແຂວງ, ບັນດາທ່ານຫົວໜ້າພະແນກການອ້ອມຂ້າງແຂວງ ແລະ ພະນັກງານ-ລັດຖະກອນພາຍໃນຫ້ອງວ່າການສະພາປະຊາຊົນແຂວງ ເຂົ້າຮ່ວມ;

ກອງປະຊຸມໄດ້ຮັບຟັງການລາຍງານຜົນການພົວພັນປະສານງານ ລະຫວ່າງ ສພຂ ກັບ ອົງການປົກຄອງແຂວງ ໄລຍະ 6 ເດືອນຜ່ານມາ ທີ່ໄດ້ຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດແລະໜ້າທີ່ຂອງແຕ່ລະພາກ

ອ່ານຕໍ່ໜ້າ 7

# ຈຳປາສັກ ມອບເງິນຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ




(ສພຂ)-ວັນທີ25 ມີນາ 2026 ນີ້, ແຂວງຈຳປາສັກໄດ້ມອບເງິນຊ່ວຍເຫຼືອ ຈຳນວນ 100 ລ້ານກີບ ເພື່ອຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນຕາງໜ້າມອບໂດຍທ່ານອາລຸນໄຊ ສູນນະລາດ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປະສັກ; ຕາງໜ້າຮັບໂດຍທ່ານ ອາດສະພັງທອງ ສີພັນດອນ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກນະຄອນ, ສສຊ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ; ມີການນຳນະຄອນຫຼວງວຽງຈັນ, ຄະນະນຳແຂວງຈຳປາສັກ ແລະ ພາກສ່ວນກ່ຽວຂ້ອງເປັນສັກຂີພະຍານ.

**(ສົມວິຈິດ ໄຊມິນຕີ ແລະ ແພງວິໄລ ສີອາລຸນ)**

# ເຊກອງ ມອບເງິນຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ




(ສພຂ) - ວັນທີ 25 ມີນາຜ່ານມາ, ແຂວງເຊກອງ ໄດ້ມອບເງິນ 100 ລ້ານກີບ ເພື່ອສົມທົບທຶນຊ່ວຍເຫຼືອຜູ້ຖືກຜົນກະທົບຈາກພາຍຸໝາກເຫັບ ຢູ່ນະຄອນຫຼວງວຽງຈັນ ໂດຍກ່າວມອບຂອງທ່ານ ບຸນຫຼາຍ ບຸດທີ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງເຊກອງ, ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ເຂດເລືອກຕັ້ງທີ 16 ແຂວງເຊກອງ ພ້ອມດ້ວຍຄະນະ ແລະ ກ່າວຮັບໂດຍທ່ານ ອາດສະພັງທອງ ສີພັນດອນ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກນະຄອນ, ສສຊ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ພ້ອມດ້ວຍຄະນະ ໂດຍມີພາກສ່ວນທີ່ກ່ຽວຂ້ອງຮ່ວມເປັນສັກຂີພະຍານ.




## ກອງປະຊຸມ...

(ຕໍ່ຈາກໜ້າ 6)

ສ່ວນເຊິ່ງສະແດງເຖິງຄວາມພະຍາຍາມ ແລະ ເອົາໃຈໃສ່ສູງໃນການພົວພັນປະສານງານຮ່ວມກັນ ຈົນມີຜົນສຳເລັດໃນແຕ່ລະດ້ານ ລວມທັງດ້ານອ່ອນ, ຂໍ້ຄົງຄ້າງ ແລະ ບາງບັນຫາທີ່ເຮັດໃຫ້ການປະຕິບັດ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ; ຈາກນັ້ນ, ກອງປະຊຸມໄດ້ຄົ້ນຄວ້າ, ປຶກສາຫາລື, ແລກປ່ຽນຄຳຄິດເຫັນແລະກ້າວໄປເຖິງການສ້າງຄວາມເປັນເອກະພາບຕໍ່ບັນດາເນື້ອໃນ ກໍຄື 16 ຫົວຂໍ້ທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມຄັ້ງປະຖົມມະລຶກຂອງສພຂ ຊຸດທີ V ທີ່ຈະຈັດຂຶ້ນໃນເມສາທີ່ຈະມາເຖິງນີ້;

ພ້ອມນັ້ນ, ກອງປະຊຸມຍັງໄດ້ພ້ອມກັນຕີລາແລະຖອດຖອນບົດຮຽນກົນໄກການປະສານງານ ລະຫວ່າງ ສພຂ ກັບ ອົງການປົກຄອງແຂວງເພື່ອປັບປຸງ ແລະ ຍົກສູງປະສິດທິຜົນໃນການພົວພັນ ແລະ ປະສານງານປະຕິບັດພາລະບົດບາດ ລະຫວ່າງ ສພຂ ກັບ ບັນດາອົງການລັດຂັ້ນແຂວງໃຫ້ດີຂຶ້ນເທື່ອລະກ້າວ; ຮັບປະກັນ ໃຫ້ການປະຕິບັດພາລະບົດບາດ ຂອງ ອພຂ ແລະ ອົງການອຳນາດລັດຂັ້ນຕ່າງໆຂອງແຂວງ ໃຫ້ສອດຄ່ອງກັບລະບຽບກົດໝາຍ, ການເຄື່ອນໄຫວຂອງແຕ່ລະອົງການໃຫ້ມີປະສິດທິຜົນແລະປະສິດທິພາບສູງຂຶ້ນ.

# ກອງປະຊຸມຮ່ວມລະຫວ່າງ ສພຂ ກັບ ອົງການປົກຄອງແຂວງເຊກອງ




(ສພຂ) - ວັນທີ 2 ເມສານີ້, ທີ່ສະໂມສອນສະພາປະຊາຊົນແຂວງ(ສພຂ)ໄດ້ມີກອງປະຊຸມຮ່ວມລະຫວ່າງສພຂກັບອົງການປົກຄອງແຂວງເຊກອງ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ແພງສີ ສີລາວີ ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ບຸນທະວີ ນະຄອນສິດ ຮອງປະທານຄະນະກຳມະການປົກຄອງແຂວງ; ມີຄະນະກຳມະການປົກຄອງແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ຊຸດທີX, ສະມາຊິກສະພາປະຊາຊົນແຂວງ ຊຸດທີ V, ພະແນກການ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການສະຫຼຸບຕີລາຄາຜົນສຳເລັດຂອງການປະສານງານລະຫວ່າງຄະນະປະຈຳສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງ; ຮ່າງບົດລາຍງານກ່ຽວກັບແຜນການກະກຽມ ແລະ ແຜນດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ຊຸດທີ V; ແຜນງົບປະມານ ໃຫ້ແກ່ການກະກຽມແລະດຳເນີນກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຂ ຊຸດທີ V ແລະ ບົດລາຍງານກ່ຽວກັບການກະກຽມຄວາມພ້ອມດ້ານເນື້ອໃນຕ່າງໆ ຂອງອົງການປົກຄອງແຂວງ ຕໍ່ກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຂ ຊຸດທີ V; ຈາກນັ້ນ, ໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ, ປຶກສາຫາລື, ແລກປ່ຽນຄຳຄິດເຫັນ ແລະ ກ້າວໄປເຖິງການສ້າງຄວາມເປັນເອກະພາບຕໍ່ບັນດາເນື້ອໃນ ກໍຄືຫົວຂໍ້ທີ່ຢູ່ໃນຄວາມຮັບຜິດຊອບ ຂອງ ສພຂ ແລະ ອົງການປົກຄອງແຂວງ ທີ່ຈະໄດ້ພ້ອມກັນສືບຕໍ່ຈັດຕັ້ງປະຕິບັດ ແລະ ນຳເຂົ້າພິຈາລະນາໃນກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ຊຸດທີ V ດ້ວຍຄວາມຮັບຜິດຊອບສູງ.

ທ່ານ ບຸນທະວີ ນະຄອນສິດ ກໍໄດ້ມີຄຳເຫັນຊີ້ນຳໃຫ້ບັນດາພະແນກການຕ່າງໆ ເອົາໃຈໃສ່ປັບປຸງເນື້ອໃນບົດລາຍງານທີ່ຈະນຳສະເໜີຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ຊຸດທີV ຕາມການປະກອບຄຳເຫັນຂອງຜູ້ແທນກອງປະຊຸມ ໂດຍສະເພາະແຜນວຽກຈຸດສຸມໃນຕໍ່ໜ້າ ໃຫ້ມີລັກສະນະບຸກທະລຸ, ລະອຽດ-ຈະແຈ້ງແລະແທດຕົວຈິງ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດມີຜົນສຳເລັດແລະເປັນຮູບປະທຳຫລາຍຂຶ້ນ.

**(ນາລີວັນ)**




ກອງປະຊຸມຮ່ວມ ລະຫວ່າງ ສະພາປະຊາຊົນແຂວງເຊກອງ ກັບ ອົງການປົກຄອງແຂວງ

# ມອບເງິນຊ່ວຍເຫຼືອຜູ້ໄດ້ຮັບຜົນກະທົບຈາກພາຍຸໝາກເຫັບ




(ສພຂ) - ວັນທີ 25 ມີນານີ້ ທີ່ສະພາແຫ່ງຊາດ, ທ່ານ ບຸນເຖິງ ດວງສະຫວັນ ກຳມະການສູນກາງພັກ,ເລຂາຄະນະບໍລິຫານງານພັກແຂວງອັດຕະປື, ສະມາຊິກສະພາແຫ່ງຊາດ(ສສຊ) ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື ພ້ອມດ້ວຍຄະນະ ໄດ້ຕາງໜ້າໃຫ້ແຂວງອັດຕະປື ໄດ້ມອບເງິນຊ່ວຍເຫຼືອ ຈຳນວນ 100 ລ້ານກີບ ຕາງໜ້າກ່າວຮັບໂດຍທ່ານ ອາດສະພັງທອງ ສີພັນດອນ ກຳມະການສູນກາງພັກ,ເລຂາຄະນະບໍລິຫານງານພັກນະຄອນ,ສສຊປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ໂດຍມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

**(ວິມັດ ສີສຸລາດ - ຂ່າວເສດຖະກິດ-ການຄ້າ)**




# ບັນຫາປື້ນອ້ອມປ້າຍ

**# ແນວລາວ**

ມີເພື່ອນຜູ້ອ່ານສ່ອງແສງມາວ່າ: ການຂຽນພາສາລາວ ຕາມປ້າຍໂຄສະນາ, ປ້າຍປຸກລະດົມຕ່າງໆ ມີຄວາມຜິດພາດແລ້ວ ມັກໂຍນຄວາມຮັບຜິດຊອບໃຫ້ເຈົ້າຂອງເປັນສ່ວນໃຫຍ່ວ່າຊັ້ນ! ແລ້ວຊິແກ້ແນວໃດ?.

ເວົ້າເລື່ອງນີ້ ຜູ້ຂຽນເຄີຍຂຽນສ່ອງແສງມາຫຼາຍເທື່ອແລ້ວ ບໍ່ຄ່ອຍຈື່ປານໃດ? ຄືຊິແມ່ນຂຽນມາແຕ່ປີ 2015 ພຸ້ນລະນໍ? ວັນເວລາຜ່ານມາ 10 ປີກວ່າແລ້ວນໍ? ແຕ່ບັນຫານີ້ ກໍຍັງມີໃຫ້ເຫັນ ແລະຄິດວ່າມັນຊິເຫັນຕໍ່ໄປອີກ ຄັນແມ່ນພວກເຮົາ ໂດຍສະເພາະຜູ້ຄຸ້ມຄອງມະຫາພາກບໍ່ເຂັ້ມງວດກວດຂັນນໍ?.

ການແກ້ນີ້ ມີຜູ້ໃຫ້ຄຳເຫັນຫຼາຍສົມຄວນເຊັ່ນ ໃຫ້ການຈັດຕັ້ງຄຸ້ມຄອງມະຫາພາກກວດກາຄືນບັນດາບໍລິສັດຫ້າງຮ້ານທີ່ດຳເນີນທຸລະກິດກ່ຽວກັບບັນຫານີ້ເຊັ່ນວ່າ: ພວກແຕ້ມປ້າຍ, ພວກປະດັບປະດາຕ້ອງໃຫ້ມີໜ່ວຍງານບັນນາທິການກວດຜ່ານເນື້ອໃນ ໂດຍແມ່ນຜູ້ມີຄວາມຮູ້; ມີປະສົບການໃນວົງການນີ້ (ນັກຂຽນອາວຸໂສ) ເຂົ້າມານັ່ງເປັນຫົວຈັກຫຼັກແຫຼ່ງ; ຄັນບໍ່ມີ ກໍບໍ່ອະນຸຍາດໃຫ້ດຳເນີນທຸລະກິດ... ພວກຫົວສະໝອງແບບນີ້ມີຢູ່ແຕ່ຫາບໍ່ງ່າຍເນີ!.

ຈັດຕັ້ງໜ່ວຍງານກວດກາເຄື່ອນທີ່ ເພື່ອຊ່ວຍຜູ້ດຳເນີນທຸລະກິດດ້ານນີ້, ບໍ່ຜ່ານການກວດກາ ບໍ່ໃຫ້ດຳເນີນທຸລະກິດ.

ພຽງແຕ່ຍົກສອງບັນຫານີ້ຂຶ້ນມາ ຜູ້ດຳເນີນທຸລະກິດກໍບອກວ່າ: ຫາຍາກຜູ້ມີປະສົບການ ອັນນີ້ຕ້ອງຍອມຮັບນໍ? ແຕ່ໃນອີກແງ່ໜຶ່ງ ກໍຕ້ອງເວົ້າກັນຢ່າງກົງໄປກົງມາວ່າ: ຄ່າແຮງງານວ່າຈ້າງລາຄາຖືກ ເມື່ອທຽບໃສ່ຄ່າຈ້າງເຮັດແນວອື່ນ... ດຽວນີ້ຄ່າຂຽນບົດໜຶ່ງປະມານສອງແສນກີບ ຜູ້ຈ້າງກະຮ້ອງໂອຍແລ້ວ! ເຂົາຢາກຈ້າງຄ່າກວດແກ້ໜຶ່ງໜ້າເຈັ້ຍເອສີ່ ປະມານຫ້າສິບພັນກີບ ຫຼື ວ່າຄ່າກວດປ້າຍໜຶ່ງ ສອງແສນກີບທໍ່ນັ້ນ... ມີຄົນຖືວ່າກວດງ່າຍໆ ຄິດວ່າໃຜກະເຮັດໄດ້ ເຊິ່ງບໍ່ມີໃຜຄິດວ່າກ່ອນຈະມີປະສົບການມາເຖິງຈຸດນີ້ ພວກເພິ່ນຜ່ານຜ່າຫຍັງມາແດ່?.

ສັງລວມແລ້ວ: ຢາກແກ້ຄວາມຜິດພາດຈະຕ້ອງໃຫ້ມີໜ່ວຍງານບັນນາທິການປະຈຳບ່ອນຫົວໜ່ວຍການຜະລິດ ເຊິ່ງເຮັດໜ້າທີ່ຄືກັນກັບບັນນາທິການກວດແກ້-ຮຽບຮຽງໃນສຳນັກງານສື່ມວນຊົນນັ້ນລະ! ຄວາມສຳຄັນຂອງວຽກງານບັນນາທິການ-ກວດແກ້ນີ້ ມັກເບິ່ງແບບຜິວເຜີນ, ບໍ່ໃຫ້ຄວາມນັບຖືພໍປະມານ? ຜູ້ເຮັດວຽກງານດ້ານນີ້ແບບມືອາຊີບ, ແບບຊ່ຽວຊານ ກໍມີຫຼາຍທ່ານ ແຕ່ວ່າໃນຕົວຈິງບໍ່ຖືກເຊື້ອເຊີນໃຫ້ໄປຊ່ວຍ... ຄັນໄປກໍຈ້າງໃນລາຄາຖືກ, ກວດຄັ້ງໜຶ່ງສູງສຸດ ກໍຊ່ຳເຝີຖ້ວຍໜຶ່ງ ອັນນີ້ກໍໜ້າເຫັນໃຈນໍ?.

ທ່ານ ມາກຊິມ ກອກກີ ນັກປະພັນເອກຂອງອະດີດສະຫະພາບໂຊຫວຽດ ແລະ ຂອງໂລກເຄີຍກ່າວໄວ້ວ່າ:... ບັນນາທິການແມ່ນໝໍຕຳແຍທີ່ຊ່ວຍໃຫ້ຜະລິດຕະພັນເກີດອອກມາໃນລະດັບໜຶ່ງທີ່ແນ່ນອນ ພວກເຂົາແມ່ນອາຈານຂອງຜູ້ຂຽນ... ສຳລັບຜູ້ຂຽນຄິດວ່າ: ບັນນາທິການແມ່ນພໍ່ຄົວໃຫຍ່ທີ່ປຸງແຕ່ງເນື້ອໃນໃຫ້ຜູ້ອ່ານໄດ້ເສບລົດຊາດ ທີ່ກິນໃຈອີ່ມເອີບ ຈາກບົດຂຽນສະບັບຕົ້ນຂອງຜູ້ຂຽນ... ສະເໜີເປັນຂໍ້ຄິດ.



## ມອບ-ຮັບ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນບ່າຍວັນທີ 30 ມີນາຜ່ານມາ ໄດ້ມີພິທີມອບ-ຮັບໜ້າທີ່ລະຫວ່າງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ຜູ້ເກົ່າ ກັບ ທ່ານ ບຸນຈັນ ສີວົງພັນ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ຜູ້ໃໝ່, ລະຫວ່າງທ່ານ ບຸນຕາ ເທບພະວົງ ປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ ສະພາແຫ່ງຊາດ (ສພຊ) ຊຸດທີ IX ກັບ ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ ສພຊ ຊຸດທີ X ເຊິ່ງມີທ່ານ ນາງ ສູນທອນ ໄຊຍະຈັກ ແລະ ທ່ານ ມອນໄຊ ລາວມົວຊື່ງ ຮອງປະທານສະພາແຫ່ງຊາດ, ບັນດາທ່ານຄະນະປະຈຳສະພາແຫ່ງຊາດ, ຮອງປະທານກຳມາທິການແລະຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ຊຸດທີ IX ແລະ ຊຸດທີ X ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມເປັນສັກຂີພະຍານ.

ໃນພິທີ, ໄດ້ຮັບຟັງການຜ່ານມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ສະບັບເລກທີ 03/ສພຊ, ລົງວັນທີ 23 ມີນາ 2026 ວ່າດ້ວຍການຮັບຮອງເອົາກົງຈັກສະພາແຫ່ງຊາດ, ແຕ່ງຕັ້ງປະທານກຳມາທິການ ແລະ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ພ້ອມທັງຮັບຟັງການລາຍງານຫຍໍ້ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງກຳມາທິການວັດທະນະທຳ-ສັງຄົມ, ກຳມາທິການບັນດາເຜົ່າ ແລະ ຫ້ອງວ່າການສະພາແຫ່ງຊາດ ໃນໄລຍະ 5 ປີຜ່ານມາ ແລະ ຄາດຄະເນທິດທາງແຜນການແຕ່ນີ້ຮອດປີ 2030. ຫຼັງຈາກນັ້ນ, ກໍໄດ້ມີການລົງລາຍເຊັນໃສ່ບົດບັນທຶກມອບ-ຮັບໜ້າທີ່ລະຫວ່າງຜູ້ເກົ່າ ແລະ ຜູ້ໃໝ່.

ໃນພິທີມອບ-ຮັບໜ້າທີ່ດັ່ງກ່າວ, ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕີລາຄາສູງຕໍ່ຜົນງານ ກໍຄືຜົນສຳເລັດທີ່ການນຳທັງສອງກຳມາທິການແລະຫ້ອງວ່າການສະພາແຫ່ງຊາດ ຊຸດທີ IX ຍາດມາໄດ້; ພ້ອມກັນນັ້ນ, ທ່ານໄດ້ເນັ້ນໜັກວ່າ: ການສັບປ່ຽນໜ້າທີ່ແລະການປັບປຸງກົງຈັກ ແລະ ບຸກຄະລາກອນຢູ່ສະພາແຫ່ງຊາດ ແມ່ນໄປຕາມທິດປັບປຸງກົງຈັກການຈັດຕັ້ງໃຫ້ມີຄວາມໂລ່ງລ່ຽນ, ກະທັດຮັດ ແລະ ມີປະສິດທິຜົນ. ທ່ານຍັງໄດ້ເນັ້ນໜັກບາງບັນຫາໃຫ້ຫ້ອງວ່າການສະພາແຫ່ງຊາດ ແລະ ກຳມາທິການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ ຈຶ່ງໄດ້ສຸມໃສ່ການປະຕິບັດໜ້າທີ່ການເມືອງຂອງຕົນ, ປະຕິບັດຕາມມະຕິຂອງສະພາແຫ່ງຊາດ ໂດຍສະເພາະແມ່ນທິດທາງແຜນການຂອງສະພາແຫ່ງຊາດ ຊຸດທີ X ແລະ ບັນດາແຜນງານ, ໂຄງການທີ່ໄດ້ຮັບຮອງເອົາໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ແລະ ໃຫ້ຫັນເປັນອັນລະອຽດຂອງຕົນ; ເປັນໃຈກາງປະສານສົມທົບທັງຢູ່ພາຍໃນສະພາແຫ່ງຊາດ ແລະ ຕິດຕາມຊຸກຍູ້ພາກສ່ວນກ່ຽວຂ້ອງຕ່າງໆ ກະກຽມດ້ານເນື້ອໃນໃຫ້ແກ່ການດຳເນີນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ; ສືບຕໍ່ບຳລຸງຍົກລະດັບວິຊາການດ້ານຕ່າງໆ ໃຫ້ແກ່ພະນັກງານ-ລັດຖະກອນຢ່າງປົກກະຕິຕໍ່ເນື່ອງ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ວຽກງານມີປະສິດທິຜົນ, ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່.

## ປະທານ...

(ຕໍ່ຈາກໜ້າ 1)

ຍຸດທະສາດ ໃຫ້ກາຍເປັນວຽກບຸລິມະສິດຂອງລັດຖະບານ; ເລັ່ງປະຕິຮູບລັດວິສາຫະກິດໃຫ້ເດີນໜ້າຢ່າງເປັນຮູບປະທຳ, ແກ້ໄຂບັນຫາໜີ້ສິນສາທາລະນະ ໃຫ້ໄດ້ຕາມແຜນທີ່ວາງໄວ້, ເລັ່ງທວງເອົາໜີ້ທີ່ຕ້ອງຮັບຢ່າງເຂັ້ມງວດ-ເດັດຂາດ, ດຶງດູດການລົງທຶນພາຍໃນ ແລະ ຕ່າງປະເທດໃຫ້ແຂງແຮງ, ວ່ອງໄວ, ທັງສ້າງຄວາມເຊື່ອໝັ້ນໃຫ້ຜູ້ລົງທຶນຕ້ອງແກ້ໄຂຢ່າງຂາດຕົວ; ສ້າງແຜນຮອງຮັບໄລຍະຂ້າມຜ່ານໄປສູ່ການອອກຈາກສະຖານະພາບດ້ອຍພັດທະນາ ແຕ່ນີ້ເຖິງປີ2029ເພື່ອຍາດແຍ່ງເອົາການຊ່ວຍເຫຼືອ, ສະໜັບສະໜູນຈາກປະເທດເພື່ອນມິດແລະອົງການຈັດຕັ້ງສາກົນ ໃຫ້ໄດ້ຫຼາຍ.

ພ້ອມນີ້, ທ່ານຍັງໄດ້ເນັ້ນໃຫ້ລັດຖະບານ ຊຸ້ນຂ້ຽວປັບປຸງກົນໄກການເຮັດວຽກໃຫ້ມີລັກສະນະບຸກທະລຸແທ້, ບຸກທະລຸໄປສູ່ການປະຕິບັດວຽກງານໃຫ້ມີປະສິດທິພາບ, ປະສິດທິຜົນສູງ, ປະຕິບັດບັນດາວຽກງານທີ່ວາງອອກ ໃຫ້ເກີດດອກອອກຜົນເປັນທີ່ປະຈັກຕາ; ຕ້ອງບຸກທະລຸໃນການຫັນເປັນທັນສະໄໝ ເຊິ່ງບັນຫານີ້ ຕ້ອງໄດ້ເລັ່ງລັດປະຕິບັດໃຫ້ປາກົດຜົນເປັນຈິງໂດຍໄວ; ຕ້ອງບຸກທະລຸຫັນປ່ຽນແບບແຜນວິທີເຮັດວຽກຂອງລັດຖະບານ ໂດຍສະເພາະການພົວພັນປະສານວຽກງານ, ການປະຕິບັດໜ້າທີ່ແລະຄວາມຮັບຜິດຊອບ ໂດຍໃຫ້ມີການຕິດຕາມກວດກາ, ຊຸກຍູ້ ແລະ ປະເມີນຄືນແຕ່ລະໄລຍະ; ຕ້ອງຍົກລະດັບໃຫ້ສະມາຊິກລັດຖະບານເປັນຜູ້ກ້າປະດິດສ້າງ, ກ້າສະເໜີຄວາມຄິດໃໝ່ໆຕໍ່ຂັ້ນເທິງພິຈາລະນາ ບົນພື້ນຖານການຜັນຂະຫຍາຍແນວທາງນະໂຍບາຍຂອງພັກແລະລະບຽບກົດໝາຍຂອງລັດ ໃຫ້ປາກົດຜົນເປັນຈິງທີ່ສາມາດຈັບຕ້ອງໄດ້. ລັດຖະບານຕ້ອງໄດ້ເຂັ້ມງວດໃນການປັບປຸງກົງຈັກການຈັດຕັ້ງ ແລະ ປັບປຸງກົນໄກເຮັດວຽກຂອງກະຊວງ, ອົງການທຽບເທົ່າ ແລະ ຂອງທ້ອງຖິ່ນ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນຂອງວຽກງານທີ່ຮັບຜິດຊອບ; ພ້ອມທັງໃຫ້ກວດກາຄືນທັງໝົດບັນດາໂຄງການລົງທຶນທັງພາຍໃນ ແລະ ຕ່າງປະເທດ ທີ່ອະນຸມັດໄປແລ້ວ ໃຫ້ເຂັ້ມງວດ ແລະ ເດັດຂາດ ຕາມກົດໝາຍ ແລະ ລະບຽບການ ຕໍ່ໂຄງການທີ່ບໍ່ມີປະສິດທິຜົນ ແລະ ໃຫ້ສືບຕໍ່ປະຕິບັດຄຳສັ່ງສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງແລະກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ໃຫ້ມີຜົນສັກສິດຢ່າງຕໍ່ເນື່ອງ.

## ສູນທອນຜົດ...

(ຕໍ່ຈາກໜ້າ 5)

ກອງປະຊຸມສະເໜີມາຍັງອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ບັນດາອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງທາງສັງຄົມ ຈົ່ງເປັນເຈົ້າການໃນການຕິດຕາມກວດກາການປະຕິບັດໜ້າທີ່ຂອງບັນດາອົງການອຳນາດລັດຕາມສິດ ແລະ ໜ້າທີ່ຂອງຕົນຕາມທີ່ກົດໝາຍກຳນົດໄວ້.

ກອງປະຊຸມສະແດງຄວາມຂອບໃຈຢ່າງສູງມາຍັງບັນດາທ່ານຜູ້ນຳຂັ້ນສູງ, ອະດີດການນຳຂັ້ນສູງ ຂອງພັກ-ລັດ ທີ່ໄດ້ຊີ້ນຳຢ່າງໃກ້ຊິດ ແລະ ສະຫຼະເວລາເຂົ້າຮ່ວມກອງປະຊຸມໃນຄັ້ງນີ້; ສະແດງຄວາມຂອບໃຈມາຍັງທຸກພາກສ່ວນທີ່ກ່ຽວຂ້ອງໄດ້ຮ່ວມກັບສະພາແຫ່ງຊາດພ້ອມກັນກະກຽມເນື້ອໃນຮອບດ້ານໃຫ້ແກ່ການດຳເນີນກອງປະຊຸມຄັ້ງນີ້ທັນຕາມກຳນົດເວລາ; ຂອບໃຈ ແລະ ຊົມເຊີຍກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ສື່ມວນຊົນ ກໍຄືຄຳສະເໜີຂອງປະຊາຊົນ ໂດຍຜ່ານໂທລະສັບສາຍດ່ວນຂອງກອງປະຊຸມ; ຂໍຂອບໃຈທຸກພາກສ່ວນກ່ຽວຂ້ອງທີ່ໄດ້ມີສ່ວນຮ່ວມໃນປະຕິບັດໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ປະກອບສ່ວນເຮັດໃຫ້ກອງປະຊຸມຄັ້ງນີ້ມີຜົນສຳເລັດຢ່າງຈົບງາມ.

ອີກເທື່ອໜຶ່ງ, ຂ້າພະເຈົ້າຂໍອວຍພອນໄຊອັນປະເສີດມາຍັງທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປລາວ, ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີພ້ອມດ້ວຍບັນດາທ່ານຜູ້ນຳ, ອະດີດການນຳຂັ້ນສູງພັກ-ລັດ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ, ນັກປະຕິວັດອາວຸໂສ, ແຂກທັງພາຍໃນ ແລະ ຕ່າງປະເທດ, ບັນດາທ່ານສະມາຊິກສະພາແຫ່ງຊາດ, ພະນັກງານ, ທະຫານ, ຕຳຫຼວດພ້ອມດ້ວຍປະຊາຊົນລາວບັນດາເຜົ່າ ຈົ່ງມີສຸຂະພາບແຂງແຮງ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນມີກຽດສະຫງ່າຂອງບັນດາທ່ານ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າຂໍປະກາດປິດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ຢ່າງເປັນທາງການນັບແຕ່ເວລານີ້ເປັນຕົ້ນໄປ.



ສຸກສະບາຍຫາຍໂຣຄາ

# 8 ອາຫານທາດເຫຼັກສູງ ກິນບຳລຸງເລືອດ ແກ້ພາວະເລືອດຈາງໄດ້ດີ

# ຮຽບຮຽງໂດຍ: ດອກຜັກກາດ

ເຄີຍມີອາການແບບນີ້ບໍ່? ໜ້າມືດງ່າຍ, ອ່ອນເພຍຕະຫຼອດເວລາ ຫຼື ຜິວພັນເບິ່ງຊີດເຫຼືອງ... ນັ້ນອາດເປັນສັນຍານເຕືອນວ່າຮ່າງກາຍຂອງທ່ານກຳລັງ "ຂາດທາດເຫຼັກ"

ທາດເຫຼັກຄືຫົວໃຈສຳຄັນໃນການສ້າງເຮໂມໂກລບິນ ເພື່ອກຳເນີດເມັດເລືອດແດງທີ່ແຂງແຮງ ມື້ນີ້ເຮົາລວມ 8 ສຸດຍອດອາຫານບຳລຸງເລືອດທີ່ຫາໄດ້ງ່າຍ ແລະ ໄດ້ຜົນມາຝາກທ່ານຜູ້ອ່ານດັ່ງນີ້:



1. ຕັບສັດ (Liver): ແຫຼ່ງທາດເຫຼັກທີ່ຮ່າງກາຍດູດຊຶມໄດ້ດີທີ່ສຸດ.

2. ເລືອດໝູ/ເລືອດໄກ່: ຕົວຊ່ວຍອັນດັບ 1 ໃນການເພີ່ມລະດັບເຮໂມໂກລບິນ.

3. ຊີ້ນແດງ (Red Meat): ເຊັ່ນ ຊີ້ນງົວ, ຊີ້ນໝູ (ສ່ວນບໍ່ຕິດມັນ) ມີທາດເຫຼັກສູງ ແລະ ໂປຣຕີນຄົບຖ້ວນ.

4. ຫອຍແດງ/ຫອຍນາງລົມ: ນອກຈາກທາດເຫຼັກແລ້ວຍັງມີສັງກະສີຊ່ວຍເສີມພູມຄຸ້ມກັນ.

5. ຜັກຫົມ (Spinach): ຜັກໃບຂຽວທີ່ເຕັມໄປດ້ວຍແຮ່ທາດບຳລຸງເລືອດ.

6. ຖົ່ວຕ່າງໆ: ເຊັ່ນ ຖົ່ວແດງ, ຖົ່ວເຫຼືອງ ເໝາະສຳລັບສາຍສຸຂະພາບ ແລະ ຄົນກິນມັງສະວິລັດ.

7. ໄຂ່ແດງ: ຂອງດີໃກ້ຕົວທີ່ກິນໄດ້ທຸກມື້ (ແນະນຳໄຂ່ຕົ້ມຈະດີທີ່ສຸດ).

8. ທັນຍະພືດ: ເຊັ່ນ ເຂົ້າໂອດ ຫຼື ງາດຳ ຊ່ວຍເສີມທາດເຫຼັກໃນມື້ເຊົ້າໄດ້ດີ.

ເພື່ອໃຫ້ຮ່າງກາຍດູດຊຶມທາດເຫຼັກໄດ້ດີຂຶ້ນ ຄວນກິນຄູ່ກັບອາຫານທີ່ມີ "ວິຕາມິນຊີສູງ" (ເຊັ່ນ: ສົ້ມ, ໝາກນາວ ຫຼື ໝາກສີດາ) ແລະ ຫຼີກເວັ້ນການດື່ມຊາ-ກາເຟພ້ອມມື້ອາຫານ ເພາະຈະໄປຂັດຂວາງການດູດຊຶມທາດເຫຼັກໄດ້.

**ແຫຼ່ງທີ່ມາ:**

**InsideLaos**

ອາດ ກະວີລາວ

# ຊປປ ລາວ

# ໂດຍ: ສໍ ພູທອນ

✻ 14 ເມສາ ເບີຍເບີກຟ້າ
1955 ເປັນຂີດໝາຍ
ປະຫວັດວິລະກຳສ້າງ
ຊາວໜຸ່ມລາວເກັ່ງກ້າ
ຊາວໜຸ່ມນາມພະລັງ
ເກີດມີມູນເຊື້ອ
ຜົນງານຍິ່ງໃຫຍ່
ຜົນງານລົ້ນມາກມີ

✻ ຍ້ອນວ່າຄວາມໜຸ່ມແໜ້ນ
ພາຍຸລົມແດງໝູນ
ຂານອາສາສະໝັກສູ້
ປະຫວັດສາດຈາລຶກໄວ້
ແຂງແກ່ນກາຍາ
ບໍ່ກົວເກງຢ້ານ
ສະຫຼະຕົນເພື່ອຊາດ
ບໍ່ວ່າງເວັ້ນລ່າລືມ ດອກນາ!

✻ ນັບຈາກການຕໍ່ສູ້
ຟ້າງຸ່ມຄືນເຂົາລີ
ຕາມດ້ວຍນາມອິງແກ້ວ
ນາຍຄູຄຳອິກພ້ອມ
ເຊັ່ງຊ່າອິງກະສັດ
ທົ່ວໂລກາກ້ອງ
ກົມມະດຳຄຽງຄູ່
ບໍ່ຍອມກົ້ມກາບມານ

✻ ຮອດຍຸກລາວຕໍ່ຕ້ານ
ຊາວໜຸ່ມສຸມກຳລັງ
ເປັນທະຫານຄົນກ້າ
ປົກປ້ອງດິນແຜ່ນພື້ນ
ຝູງມານພວກຣາວີ
ຊ່ວຍຊູເມືອງບ້ານ
ຂານອາສາເພື່ອຊາດ
ອາສາສູ້ບໍ່ຖອຍ

✻ ຍຸກໃໝ່ຊາດຮຽກຮ້ອງ
ຮັກສາດິນແດນຜືນ
ເອົາສະຕິປັນຍາສູ້
ຊາວໜຸ່ມຈອມພະລັງ
ພັດທະນາເມືອງບ້ານ
ແຮງກາຍສຸມໃສ່
ຊາດຈະເຮືອງຮຸ່ງໄດ້ ອາໄສຊາວໜຸ່ມນ້ອຍ ກຳລັງກ້າຊ່ວຍພັກເຮົາ ຊອບແລ້ວ!



ສັບສາຍ ລະບາຍ

(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

✻ **ອີກ**ເອີຍ **14 ເມສາ** ວັນສ້າງຕັ້ງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ທີ່ຈະໄດ້ຕ່າວໝູນວຽນມາບັນຈົບຄົບຮອບ **71 ປີ** ຂໍຝາກເອຊີບີ້ຍື່ນຕ້ອນ ພອນໄຊສົ່ງໄປຫາຊາວໜຸ່ມລາວສາຫາ ທົ່ວ**ເໜືອ-ກາງ-ໃຕ້** ຂໍໃຫ້ມີສຸກລົ້ນກາຍໃຈໂດຍດັ່ງ ທັງວຽກງານເດັ່ນກ້າວ ຈະເລີນຂຶ້ນລື່ນກວ່າຫຼັງ **ທ່ານເອີຍ!**

✻ **ເນື່ອງ**ໃນໂອກາດ ປີເກົ່າ **(ມະເສັງ)** ພວມຫຍັບຍ່າງຍ້າຍ ປີ **(ມະແມ)** ໃໝ່ວຽນມາ ຊ່າວ່າບ່າພອນໄຊ ເພັດພອຍມາຕ້ອນ ຫາບຄອນເງິນຄຳແກ້ວ ມາຝາກຄົນທີ່ພວມອ່ານ ດັ່ງສຸຣິລື່ນບ້ານ ລອຍລົ້ນຕະຫຼອດໄປ ສ່ວນຜູ້ໃດຫາກມາເປີດພົ້ ກໍໂດຍດັ່ງດຽວກັນ ຂໍໃຫ້ເງິນຄຳໄຫຼ ຫຼັ່ງມາໂຮມເຕົ້າ ຢ່າໄດ້ຈົບໝອງເສົ້າ ແຜນຄ່າລ່າເຮົາທຸກທົບແທ່ງ ຈ່າຍຢ່າບົກຈົກຢ່າແຫ້ງ ເງິນຄຳລົ້ນອັ່ງຄັງ **ທຸກທ່ານເນີ!**

ຊອບຍິ້ມ

# ພົ້ງດຶ່ງ

## ເລື່ອງ: ຊິງແກ່

ມື້ກ່ອນ, ຂ້ອຍໄປຍ່າງຊື້ເຄື່ອງຢູ່ຕະຫຼາດ ເຫັນແມ່ຕູ້ຄົນໜຶ່ງກຳລັງເລືອກຊື້ໝາກເລັ່ນ ກັບແມ່ຄ້າໜ້າຕາຊົງເຈົ້າເລ່ເຈົ້າກົນ; ແມ່ຕູ້ເລືອກເອົາໝາກເລັ່ນ 3 ໜ່ວຍ ແລ້ວເອົາໃຫ້ແມ່ຄ້າໄປໃສ່ຊິງຊັ່ງ, ແມ່ຄ້າບອກ: "30 ພັນ".

"ເອົາສອງໜ່ວຍກະພໍແລ້ວ" ແມ່ຕູ້ຈັບໜ່ວຍທີ່ໃຫຍ່ທີ່ສຸດອອກ.

ແມ່ຄ້າກົ້ມເບິ່ງຊິງຊັ່ງ: "25 ພັນເດີເຈົ້າ" ແມ່ຄ້າບອກ.

ຂ້ອຍຄິດໃນໃຈ "ແມ່ຄ້າຜູ້ນີ້ກະຊິຟັນເງິນແມ່ຕູ້ແລ້ວ", ແຕ່ກ່ອນທີ່ຂ້ອຍຊິໄດ້ອ້າປາກເວົ້າຫຍັງ ກໍເຫັນແມ່ຕູ້ຈົກເອົາເງິນໃບຫ້າພັນຍື່ນໃຫ້ແມ່ຄ້າ ແລ້ວຍ່າງອອກໄປພ້ອມກັບໝາກເລັ່ນໜ່ວຍໃຫຍ່!!!



ສຸພາສິດ-ຄະຕິເຕືອນໃຈ

#ດອກຫຍ້າ

ເວລາບໍ່ເຄີຍປ່ຽນແປງຄົນ
ພຽງແຕ່ເວລາ
ເປີດເຜີຍຕົວຕົນຂອງຄົນອອກມາ

ລັດຖະສະພາຕ່າງປະເທດ

# ຈີນ ເຜີຍແຜ່ບົດລາຍງານ ສະບັບເຕັມຂອງຄະນະປະຈຳ NPC



(Xinhua) - ວັນອາທິດທີ 15 ມີນານີ້, ສຳນັກຂ່າວຊິນຮວາ ໄດ້ເຜີຍແຜ່ບົດລາຍງານສະບັບເຕັມກ່ຽວກັບການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (NPC); ບົດລາຍງານສະບັບນີ້ ເຊິ່ງສະເໜີໂດຍ ຈ້າວເລີ້ຈີ້ປະທານຄະນະປະຈຳNPC ໄດ້ຮັບການອະນຸມັດເມື່ອວັນທີ 12 ມີນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ຊຸດທີ XIV, ບົດລາຍງານດັ່ງກ່າວ ໄດ້ທົບທວນຄືນການເຄື່ອນໄຫວວຽກງານຂອງຄະນະປະຈຳໃນຮອບປີທີ່ຜ່ານມາໃນຫົກດ້ານຄື:

1. ໄດ້ເສີມສ້າງການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ເພີ່ມທະວີການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ເພື່ອຮັບປະກັນຄວາມເປັນເອກະພາບຂອງການປົກຄອງລັດດ້ວຍກົດໝາຍ;

2. ໄດ້ເສີມຂະຫຍາຍວຽກງານດ້ານນິຕິບັນຍັດ ເພື່ອສະໜັບສະໜູນການປະຕິຮູບ ແລະ ການພັດທະນາຜ່ານກົດໝາຍທີ່ມີຄຸນນະພາບສູງ;

3. ໄດ້ປະຕິບັດໜ້າທີ່ຕິດຕາມກວດກາ,ປະຕິບັດຕາມບົດບາດສຳຄັນຂອງ NPC ໃນລະບົບການຕິດຕາມກວດກາຂອງພັກ-ລັດ;

4. ໄດ້ພັດທະນາ ແລະ ຂະຫຍາຍຂອບເຂດວຽກງານທີ່ກ່ຽວຂ້ອງກັບສະມາຊິກສະພາ, ເຮັດໃຫ້ພວກເຂົາສາມາດປະຕິບັດໜ້າທີ່ຂອງຕົນໄດ້ຢ່າງມີປະສິດທິພາບຫຼາຍຂຶ້ນ;

5. ໄດ້ນຳໃຊ້ລັກສະນະ ແລະ ຈຸດແຂງທີ່ເປັນເອກະລັກຂອງ NPC ໃນການດຳເນີນການແລກປ່ຽນສາກົນ ເພື່ອສະໜັບສະໜູນວາລະທາງການທູດໂດຍລວມຂອງປະເທດ;

6. ໄດ້ດຳເນີນການປັບປຸງຕົນເອງຢ່າງກວ້າງຂວາງ, ພັດທະນາຄວາມສາມາດ ແລະ ປະສິດທິພາບໃນການປະຕິບັດໜ້າທີ່ຕາມກົດໝາຍຢ່າງຕໍ່ເນື່ອງ.

ບົດລາຍງານສະບັບນີ້ ກຳນົດໜ້າວຽກຕົ້ນຕໍຂອງຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ສຳລັບປີຕໍ່ໄປດັ່ງນີ້:

- ສົ່ງເສີມການຈັດຕັ້ງປະຕິບັດລັດຖະທຳມະນູນຢ່າງຄົບຖ້ວນ;
- ປັບປຸງລະບົບກົດໝາຍສັງຄົມນິຍົມທີ່ມີລັກສະນະສະເພາະຂອງຈີນ;
- ເສີມຂະຫຍາຍປະສິດທິພາບ ແລະ ປະສິດທິຜົນຂອງການຕິດຕາມກວດກາ;
- ສະໜັບສະໜູນສະມາຊິກສະພາໃນການປະຕິບັດໜ້າທີ່ຕາມກົດໝາຍ;
- ສືບຕໍ່ມີສ່ວນຮ່ວມຢ່າງຫ້າວຫັນໃນການພົວພັນສາກົນຢ່າງແຂງແຮງ;
- ປະຕິບັດໜ້າທີ່ 4 ພາລະບົດບາດໃຫ້ສຳເລັດ.

# EI Salvador ປັບປຸງລັດຖະທຳມະນູນ ຂັງຄຸກຕະຫຼອດຊີວິດ "ຄາດຕະກອນ-ຜູ້ກໍ່ການຮ້າຍ"

(AP) - ວັນທີ 17 ມີນານີ້, ສະມາຊິກສະພານິຕິບັນຍັດຂອງ ແອນ ຊານວາດໍ ຜ່ານຮ່າງລັດຖະທຳມະນູນສະບັບປັບປຸງ ທີ່ສະເໜີໂດຍປະທານາທິບໍດີ ນາຢິບ ບູເຄເລ (Nayib Bukele) ເພື່ອອະນຸຍາດໃຫ້ລົງໂທດຕັດອິດສະລະພາບຕະຫຼອດຊີວິດສຳລັບຄາດຕະກອນ, ຜູ້ຂົ່ມຂືນ ແລະ ຜູ້ກໍ່ການຮ້າຍ; ສະພານິຕິບັນຍັດ ທີ່ມີທັງໝົດ 60 ທີ່ນັ່ງ ເຊິ່ງພັກແນວຄວາມຄິດໃໝ່ ທີ່ເປັນພັກລັດຖະບານຂອງ ບູເຄເລ ມີສຽງສ່ວນຫຼາຍ ໄດ້ລົງມະຕິເກືອບເປັນເອກະສັນດ້ວຍຄະແນນສຽງເຫັນດີ 59 ຕໍ່ 1 ສຽງ ໃຫ້ເພີ່ມໂທດສູງສຸດສຳລັບອາຊະຍາກຳບາງປະເພດ ເຊິ່ງປັດຈຸບັນຢູ່ທີ່ 60 ປີ.

ກຸສຕາໂວ ວິລລາໂຕໂຣ (Gustavo Villatoro) ລັດຖະມົນຕີກະຊວງຍຸຕິທຳ ແລະ ຄວາມໝັ້ນຄົງ ເຊິ່ງເປັນຜູ້ສະເໜີເລື່ອງນີ້ຕໍ່ສະພາກ່າວວ່າ: ສົງຄາມເຕັມຮູບແບບຕໍ່ຜູ້ກໍ່ການຮ້າຍຍັງບໍ່ຢຸດ ແລະ ນັ້ນແມ່ນເຫດຜົນທີ່ພວກເຮົາຕ້ອງຮ້ອງຂໍໃຫ້ລົງໂທດຕັດອິດສະລະພາບຕະຫຼອດຊີວິດສຳລັບອາຊະຍາກອນປະເພດນີ້ ເຊິ່ງລວມທັງຄາດ ຕະກອນ ແລະ ຜູ້ຂົ່ມຂືນ.

ບູເຄເລ ເຊິ່ງເປັນພັນທະມິດທີ່ໃກ້ຊິດກັບປະທານາທິບໍດີ ໂດນັລ ທຣຳ ຜູ້ນຳສະຫະລັດ ບໍລິຫານປະເທດພາຍໃຕ້ການປະກາດສະຖານະການສຸກເສີນ ເມື່ອປີ 2022 ເຊິ່ງເຮັດໃຫ້ອາຊະຍາກຳຫຼຸດລົງຢ່າງຫຼວງຫຼາຍ, ເຈົ້າໜ້າທີ່ສາມາດຈັບກຸມຜູ້ຖືກສົງໄສກ່ຽວຂ້ອງກັບກຸ່ມແກ໊ງອາຊະຍາກຳ ປະມານ 91,300 ຄົນ ໂດຍບໍ່ມີໝາຍຈັບ; ການປາບປາມດັ່ງກ່າວ ເຮັດໃຫ້ອັດຕາການຄາດຕະກຳໃນ ແອນ ຊານວາດໍ ຫຼຸດລົງຕໍ່າສຸດເປັນປະຫວັດສາດ, ແຕ່ກໍກໍ່ໃຫ້ເກີດສຽງວິພາກວິຈານກ່ຽວກັບການລະເມີດສິດທິມະນຸດເຊັ່ນກັນ.



# Cameroon ໄດ້ປະທານສະພາຜູ້ໃໝ່






(Xinhua) - ວັນອັງຄານທີ 17 ມີນານີ້, ທີໂອດໍ ດາຕູໂອ (Theodore Datouo) ສະມາຊິກສະພາຈາກຂະບວນການປະຊາທິປະໄຕປະຊາຊົນກາເມີຣູນ(Cameroon People's Democratic Movement - CPDM) ເຊິ່ງເປັນພັກລັດຖະບານ ໄດ້ຮັບເລືອກເປັນປະທານສະພາແຫ່ງຊາດ; ເຂົາໄດ້ຮັບຄະແນນ 133 ຈາກ 147 ສຽງ ໃນກອງປະຊຸມໃຫຍ່ເພື່ອເລືອກຕັ້ງທີ່ຈັດຂຶ້ນຢູ່ນະຄອນຫຼວງຢາອຸນເດ (Yaounde) ໂດຍມີບັດລົງຄະແນນ 14 ໃບ ຖືກປະກາດວ່າເປັນໂມຄະ, ຕາມຜົນການນັບຄະແນນທີ່ປະກາດໂດຍສະພາແຫ່ງຊາດ.

ປະທານສະພາແຫ່ງຊາດຜູ້ໃໝ່ ອາຍຸ 66 ປີ ຈະສືບທອດຕຳແໜ່ງຕໍ່ຈາກ ຄາວາເຢ ເຢກີ ຈິບຣິລ (Cavaye Yeguie Djibril)ບຸກຄົນສຳຄັນຂອງພັກ CPDM ເຊິ່ງດຳລົງຕຳແໜ່ງມາຕັ້ງແຕ່ປີ 1992; ກ່ອນໄດ້ຮັບການເລືອກຕັ້ງ, ດາຕູໂອ ດຳລົງຕຳແໜ່ງຮອງປະທານສະພາແຫ່ງຊາດ.

ສະພາແຫ່ງຊາດ ແຫ່ງສາທາລະນະລັດ ກາເມີຣູນ ມີ 180 ທີ່ນັ່ງ, ອາຍຸການ 5 ປີ.

ຕອນແລງວັນດຽວກັນ, ອາບູບາກາຣີ ອັບດູລາເຢ (Aboubakary Abdoulaye) ສະມາຊິກພັກ CPDM ໄດ້ຮັບເລືອກເປັນປະທານສະພາສູງ ເຊິ່ງໄດ້ຮັບຄະແນນສຽງ 100%, ຕາມຜົນການນັບຄະແນນຢ່າງເປັນທາງການທີ່ເຜີຍແຜ່ໂດຍສະພາສູງ; ຊາຍອາຍຸ 64 ປີຜູ້ນີ້ ເຂົ້າຮັບຕຳແໜ່ງຕໍ່ຈາກ ມາເຊວ ນຽດ ນະຈີເຟນຈີ (Marcel Niat Njifenji) ເຊິ່ງດຳລົງຕຳແໜ່ງປະທານສະພາສູງ ມາຕັ້ງແຕ່ປີ 2013, ອັບດູລາເຢ ດຳລົງຕຳແໜ່ງຮອງປະທານສະພາສູງກ່ອນໄດ້ຮັບການເລືອກຕັ້ງ.

ປະເທດໃນອາຟຣິກາກາງແຫ່ງນີ້ ຈັດການເລືອກຕັ້ງສະພາສູງຄັ້ງທຳອິດໃນປີ2013.

ສະພາສູງ ມີ 100 ທີ່ນັ່ງ.

# Estonia ກ້າວສູ່ພະລັງງານ ນິວເຄລຍດ້ວຍຮ່າງກົດໝາຍ



(Xinhua) - ລັດຖະບານແອັດສະໂຕນີ ໄດ້ອະນຸມັດຮ່າງກົດໝາຍພະລັງງານນິວເຄລຍ ແລະ ຄວາມປອດໄພ ເມື່ອວັນພະຫັດທີ 19 ມີນາຜ່ານມາ ແລະ ສົ່ງໃຫ້ລັດຖະສະພາພິຈາລະນາ; ຮ່າງກົດໝາຍນີ້ ສະເໜີໂດຍກະຊວງການປ່ຽນແປງສະພາບອາກາດ ມີຈຸດປະສົງເພື່ອສ້າງຂອບກົດໝາຍທີ່ສົມບູນແບບສຳລັບການນຳໃຊ້ພະລັງງານນິວເຄລຍ ແລະ ກິດຈະກຳທີ່ກ່ຽວຂ້ອງ.

ອັນເດຣສ ຊຸດຕ໌ (Andres Sutt) ລັດຖະມົນຕີກະຊວງພະລັງງານແລະສິ່ງແວດລ້ອມ ກ່າວວ່າ ໂຮງໄຟຟ້ານິວເຄລຍ ພວມຖືກພິຈາລະນາເປັນໜຶ່ງໃນທາງເລືອກສຳລັບກຳລັງການຜະລິດໄຟຟ້າທີ່ສາມາດຄວບຄຸມໄດ້ຫຼັງຈາກປີ 2035 ເຊິ່ງຈະຊ່ວຍຮັບປະກັນຄວາມໝັ້ນຄົງໃນການສະໜອງພະລັງງານຂອງປະເທດ.

ພາຍໃຕ້ຮ່າງກົດໝາຍ, ອົງການປົກປ້ອງຜູ້ບໍລິໂພກແລະຄຸ້ມຄອງດ້ານວິຊາການ ຈະເຮັດໜ້າທີ່ເປັນອົງການຄຸ້ມຄອງເອກະລາດ ສຳລັບການອອກໃບອະນຸຍາດ ແລະ ການດູແລຄວາມປອດໄພດ້ານນິວເຄຼຍ; ກົດໝາຍຈະອະນຸ ຍາດສະເພາະເຕັກໂນໂລຊີທີ່ໄດ້ຮັບການພິສູດແລ້ວໃນທາງປະຕິບັດ ແລະ ກຳນົດຂັ້ນຕອນການອອກໃບອະນຸຍາດຕັ້ງແຕ່ການປະເມີນເບື້ອງຕົ້ນ ແລະ ໃບອະນຸຍາດກໍ່ສ້າງ ໄປຈົນເຖິງການທົດສອບ, ການດຳເນີນງານແລະການຮື້ຖອນໂຮງໄຟຟ້າ.

ຮ່າງກົດໝາຍກຳນົດວ່າ ຜູ້ພັດທະນາ ແລະ ຜູ້ປະກອບການໂຮງໄຟຟ້ານິວເຄລຍ ຈະຕ້ອງຮັບຜິດຊອບຢ່າງເຕັມ ທີ່ຕໍ່ຄວາມປອດໄພ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນເມື່ອສິ້ນສຸດອາຍຸການໃຊ້ງານ.

ຫາກໄດ້ຮັບການອະນຸມັດ, ກົດໝາຍຈະມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2027.

ອີງຕາມການຄາດຄະເນໃນປັດຈຸບັນ, ໂຮງໄຟຟ້ານິວເຄລຍໃນແອັດສະໂຕນີ ອາດຈະສ້າງສຳເລັດໄດ້ໄວທີ່ສຸດໃນໄລຍະກາງຊຸມປີ 2030.

# ສະພານິຕິບັນຍັດ Macao ຜ່ານຮ່າງກົດໝາຍ ສ້າງຕັ້ງຄະນະກຳມະການຮັກສາຄວາມໝັ້ນຄົງແຫ່ງຊາດ




(Xinhua) - ວັນທີ 19 ມີນານີ້, ສະພານິຕິບັນຍັດຂອງເຂດບໍລິຫານພິເສດມາເກົາ (Macao Special Administrative Region - MSAR) ໄດ້ຈັດກອງປະຊຸມຄົບຄະນະ ແລະ ລົງມະຕິເປັນເອກະສັນຜ່ານຮ່າງກົດໝາຍເພື່ອສ້າງຕັ້ງຄະນະກຳມະການຮັກສາຄວາມໝັ້ນຄົງແຫ່ງຊາດຂອງ MSAR; ຕາມທີ່ສະພານິຕິບັນຍັດລະບຸ, ຮ່າງກົດໝາຍສະບັບນີ້ ໄດ້ກຳນົດໜ້າທີ່, ອົງປະກອບ ແລະ ຂອບການດຳເນີນງານຂອງຄະນະກຳມະການຢ່າງຊັດເຈນ ເຊິ່ງເຮັດຄະນະກຳມະການມີພື້ນຖານທາງກົດໝາຍທີ່ໜັກແໜ້ນກວ່າເກົ່າ.

ລັດຖະບານMSAR ຖະແຫຼງວ່າ ການຮັກສາອະທິປະໄຕ, ຄວາມໝັ້ນຄົງ ແລະ ຜົນປະໂຫຍດດ້ານການພັດທະນາຂອງຊາດແມ່ນຫຼັກການສູງສຸດຂອງ "ໜຶ່ງປະເທດ, ສອງລະບົບ" ແລະ ເປັນຄວາມຮັບຜິດຊອບຕາມລັດຖະທຳມະນູນຂອງເຂດບໍລິຫານພິເສດມາເກົາ ແລະ ໃຫ້ຄຳໝັ້ນສັນຍາວ່າຈະສະໜັບສະໜູນຄະນະກຳມະການຢ່າງເຕັມທີ່ໃນການປະຕິບັດໜ້າທີ່ຕາມກົດໝາຍ ແລະ ຈະປັບປຸງຂອບກົດໝາຍ ແລະ ກົນໄກການບັງຄັບໃຊ້ ເພື່ອຮັກສາຄວາມໝັ້ນຄົງແຫ່ງຊາດຢ່າງຕໍ່ເນື່ອງ.

ເລືອງ ຊຸນ ອ໊ອກ (Leong Sun Iok) ສະມາຊິກສະພານິຕິບັນຍັດ ກ່າວກັບສຳນັກຂ່າວຊິນຮວາວ່າ ມາດຕະການດັ່ງກ່າວ ສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນທີ່ເຂັ້ມແຂງຂອງລັດຖະບານເຂດບໍລິຫານພິເສດມາເກົາ ຕໍ່ຄວາມໝັ້ນຄົງຂອງຊາດ ໂດຍຮັບປະກັນວ່າຄະນະກຳມະການມີພື້ນຖານທາງກົດໝາຍຢ່າງເຕັມທີ່ໃນການປະຕິບັດໜ້າທີ່ ແລະ ການປະສານງານຂອງອົງການຕ່າງໆ; ເຂົາກ່າວຕື່ມວ່າ ຮ່າງກົດໝາຍສະບັບນີ້ ຊ່ວຍສ້າງຂອບຄວາມໝັ້ນຄົງຂອງຊາດທີ່ເຂັ້ມແຂງ ແລະ ປົກປ້ອງຄວາມຈະເລີນຮຸ່ງເຮືອງ ແລະ ສະຖຽນລະພາບໃນໄລຍະຍາວຂອງສັງຄົມ ແລະ ການພັດທະນາຂອງມາເກົາ.

ຮ່າງກົດໝາຍສະບັບນີ້ ຈະມີຜົນບັງຄັບໃຊ້ໃນວັນຖັດຈາກວັນທີ່ປະກາດໃນຈົດໝາຍເຫດທາງລັດຖະການຂອງ MSAR.

# ເລືອກຕັ້ງປະທານສະພາຜູ້ໃໝ່ຂອງມຽນມາ




(Xinhua) - ອູ ຄິນ ຢີ (U Khin Yi) ສະມາຊິກສະພາຕໍ່າຈາກພັກສະຫະພາບສາມັກຄີ ແລະ ການພັດທະນາ (Union Solidarity and Development Party - USDP) ໄດ້ຮັບເລືອກເປັນປະທານສະພາຕໍ່າຜູ້ໃໝ່ ໃນກອງປະຊຸມລັດຖະສະພາທີ່ຈັດຂຶ້ນທີ່ນະຄອນຫຼວງເນປີດໍ (Naypyidaw) ເມື່ອວັນຈັນທີ 16 ມີນາຜ່ານມາ, ຕາມລາຍງານຂອງສະຖານີວິທະຍຸ ແລະ ໂທລະພາບມຽນມາ(MRTV); ອູ ຄິນ ຢີ ໄດ້ຮັບເລືອກໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາຕໍ່າ ຊຸດທີ III, ປະທານພັກ USDP ໄດ້ເປັນສະມາຊິກສະພາຕໍ່າຫຼັງຈາກຊະນະການເລືອກຕັ້ງທົ່ວໄປໃນເຂດເລືອກຕັ້ງເມືອງເຊຢາທິຣິ (Zeyathiri).

ໃນວັນທຳອິດຂອງກອງປະຊຸມຄັ້ງປະຖົມມະລຶກຂອງສະພາຕໍ່າ, ມີສະມາຊິກສະພາຕໍ່າເຂົ້າຮ່ວມຄົບທັງ 373 ຄົນ.

ອອງ ລິນ ດະເວ (Aung Lin Dwe) ສະມາຊິກສະພາສູງຈາກພັກສະຫະພາບສາມັກຄີ ແລະ ການພັດທະນາ ໄດ້ຮັບເລືອກເປັນປະທານສະພາສູງຜູ້ໃໝ່ ໃນກອງປະຊຸມລັດຖະສະພາທີ່ຈັດຂຶ້ນເມື່ອວັນທີ 18 ມີນາ, ເຂົາໄດ້ຮັບເລືອກໃນວັນທຳອິດຂອງກອງປະຊຸມຄັ້ງປະຖົມມະລຶກຂອງສະພາສູງ ຊຸດທີ III; ອອງ ລິນ ດະເວ ໄດ້ເປັນສະມາຊິກສະພາສູງ ຫຼັງຈາກຊະນະການເລືອກຕັ້ງໃນເຂດເລືອກຕັ້ງພາກພື້ນມັນດາເລ (Mandalay).

ໃນວັນທຳອິດຂອງກອງປະຊຸມຄັ້ງປະຖົມມະລຶກຂອງສະພາສູງ, ມີສະມາຊິກສະພາສູງເຂົ້າຮ່ວມຄົບທັງ 213 ຄົນ.

ພັກ USDP ໄດ້ຮັບທີ່ນັ່ງສ່ວນຫຼາຍໃນລັດຖະສະພາສະຫະພາບ ໃນການເລືອກຕັ້ງທົ່ວໄປທີ່ຈັດຂຶ້ນເມື່ອຕົ້ນປີນີ້, ຕາມຜົນການເລືອກຕັ້ງຢ່າງເປັນທາງການທີ່ເຜີຍແຜ່ໂດຍຄະນະກຳມະການເລືອກຕັ້ງແຫ່ງສະຫະພາບ.

ລັດຖະສະພາສະຫະພາບຂອງມຽນມາປະກອບດ້ວຍສອງສະພາ ທີ່ມີທັງໝົດ 664 ທີ່ນັ່ງ ຄື: ສະພາຕໍ່າ ມີ 440 ທີ່ນັ່ງ ແລະ ສະພາສູງ ມີ 224 ທີ່ນັ່ງ.

ລັດຖະສະພາສະຫະພາບທີ່ສ້າງຕັ້ງຂຶ້ນໃໝ່ນີ້ ຈະເລືອກປະທານາທິບໍດີຜູ້ໃໝ່ ເຊິ່ງຕໍ່ມາຈະສ້າງຕັ້ງລັດຖະບານສະຫະພາບຊຸດໃໝ່.

# ຫວຽດນາມ ເຜີຍຜົນເລືອກຕັ້ງ ສສຊ

(Xinhua) - ສຳນັກຂ່າວສານຫວຽດນາມລາຍງານວ່າ: ຕອນບ່າຍວັນເສົາທີ 21 ມີນານີ້, ຄະນະກຳມະການເລືອກຕັ້ງແຫ່ງຊາດຂອງຫວຽດນາມ ໄດ້ເປີດເຜີຍລາຍຊື່ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ XVI ຈຳນວນ 500 ຄົນ ທີ່ໄດ້ຮັບເລືອກຕັ້ງຢ່າງເປັນທາງການ; ການເລືອກຕັ້ງຄັ້ງນີ້ ຈັດຂຶ້ນທົ່ວປະເທດເມື່ອວັນອາທິດທີ 15 ມີນາ2026 ໂດຍມີຜູ້ໄປໃຊ້ສິດເລືອກຕັ້ງເກືອບ 76.2 ລ້ານຄົນ ຫຼື 99.7%.

ໃນຖານະທີ່ເປັນອົງການສູງສຸດແຫ່ງອຳນາດລັດຂອງຫວຽດນາມ, ສະພາແຫ່ງຊາດຊຸດທີ XVI ຈະເປີດກອງປະຊຸມຄັ້ງປະຖົມມະລຶກໃນວັນທີ6ເມສານີ້.




# UK ລົງມະຕິຖອດສິດສະມາຊິກສືບທອດອອກຈາກສະພາສູງ



(REUTERS) - ຜູ້ສືບທອດທາງສາຍເລືອດຂອງສະຫະລາຊະອານາຈັກ (United Kingdom - UK) ຈະບໍ່ສາມາດດຳລົງຕຳແໜ່ງແລະລົງມະຕິໃນສະພາຊຸນນາງ (House of Lords) ຫຼື ສະພາສູງ ໄດ້ອີກຕໍ່ໄປ ຫຼັງຈາກສະພາແຫ່ງນີ້ ໄດ້ຜ່ານຮ່າງກົດໝາຍຖອດຖອນສິດດັ່ງກ່າວ ເມື່ອຕອນແລງວັນອັງຄານທີ 10 ມີນາຜ່ານມາ; ຢ່າງໃດກໍຕາມ, ຮ່າງກົດໝາຍດັ່ງກ່າວ ເຊິ່ງຈະມີຜົນບັງຄັບໃຊ້ເມື່ອລັດຖະບານ UK ປິດສະໄໝປະຊຸມໃນທ້າຍປີນີ້ ຈະເຮັດໃຫ້ຊຸນນາງສືບຕະກູນທັງ 92 ຄົນ ທີ່ຍັງມີສິດລົງຄະແນນສຽງໃນສະພາສູງ ສິ້ນສຸດສະມາຊິກກະພາບ ແລະ ຈະກັບມາດຳລົງຕຳແໜ່ງໄດ້ ກໍຕໍ່ເມື່ອພວກເຂົາໄດ້ຮັບການແຕ່ງຕັ້ງເປັນ "ຊຸນນາງຕະຫຼອດຊີວິດ" ເທົ່ານັ້ນ.

ລັດຖະບານກ່າວວ່າ ມາດຕະການນີ້ແມ່ນໜຶ່ງໃນການປະຕິຮູບຄັ້ງໃຫຍ່ທີ່ສຸດແລະຖືເປັນການສຳເລັດການປະຕິຮູບສະພາສູງ ເຊິ່ງເລີ່ມຕົ້ນພາຍໃຕ້ລັດຖະບານພັກແຮງງານຂອງອະດີດນາຍົກລັດຖະມົນຕີ ໂທນີ ແບລຣ໌ (Tony Blair) ໃນທ້າຍຊຸມປີ 1990.

"ສະພາສູງມີບົດບາດສຳຄັນໃນລະບົບສອງສະພາຂອງພວກເຮົາ, ແຕ່ບໍ່ມີໃຜຄວນນັ່ງຢູ່ໃນສະພາໂດຍອາໄສຕຳແໜ່ງທີ່ສືບທອດທາງສາຍເລືອດເຊິ່ງການຜ່ານຮ່າງກົດໝາຍສະບັບນີ້ ຖືເປັນບາດກ້າວທຳອິດທີ່ສຳຄັນຕໍ່ການປະຕິຮູບສະພາສູງ ໂດຍຈະມີການປ່ຽນແປງຕື່ມອີກໃນພາຍຫຼັງທີ່ລວມທັງຂໍ້ກຳນົດການກະສຽນອາຍຸ ແລະ ການເຂົ້າຮ່ວມຂອງສະມາຊິກສະພາສູງ" ນາງ ບາຣອນເນສ ສະມິດ (Baroness Smith) ຜູ້ນຳສະພາສູງ ກ່າວ.

ເຖິງແມ່ນລັດຖະບານລະບຸວ່າ ການຖອດຕຳແໜ່ງຊຸນນາງສືບຕະກູນທີ່ "ຫຼ້າສະໄໝ ແລະ ບໍ່ເປັນປະຊາທິປະໄຕ" ເປັນການປະຕິບັດຕາມຄຳໝັ້ນສັນຍາທີ່ສຳຄັນ; ຢ່າງໃດກໍຕາມ, ຊຸນນາງ ຟໍຣ໌ໄຊທ໌ (Forsyth) ປະທານສະພາສູງ ໄດ້ກ່າວໃນຖະແຫຼງການສະແດງຄວາມຂອບໃຈຕໍ່ການປະຕິບັດໜ້າທີ່ຮັບໃຊ້ປະເທດຊາດຂອງຊຸນນາງສືບຕະກູນ.

## ເບິ່ງໄວ້ ໄດ້ຂີດຂຽນ

# ຕຳແໜ່ງຫາຍ ຍ້ອນ ສະມາຊິກຄອບຄົວໜີເລຍ

❖ ວິເສດ ສະແຫວງສຶກສາ

ມີເລື່ອງເກົ່າໆ ຂ່າວສານປະເທດລາວ (ຂປລ) ປະຈຳວັນທີ 17 ທັນວາ 2014 ທີ່ບອກວ່າທາງການຈີນເອົາຈິງກັບມາດຕະການຕ້ານການສໍ້ລາດບັງຫຼວງ, ການໂກງກິນເງິນລັດ ກໍຄືການໃຊ້ຈ່າຍງົບປະມານແບບຟຸ່ມເຟືອຍ. ຂ່າວບອກວ່າທາງການຈີນໄດ້ຫຼຸດຊັ້ນເຈົ້າໜ້າທີ່ຄົນສຳຄັນຂອງລັດ ລົງຈຳນວນ 1,000 ຄົນ ຍ້ອນມີສະມາຊິກຄອບຄົວຢູ່ຕ່າງປະເທດ ທີ່ບໍ່ຍອມກັບຄືນປະເທດ, ມາດຕະການນີ້ ນອນຢູ່ໃນຍຸດທະສາດຕ້ານການສໍ້ລາດບັງຫຼວງແບບເຖິງກົກເຖິງຮາກຂອງທ່ານ ສີ ຈິ້ນຜິງ ທີ່ຂຶ້ນມາກຳອຳນາດສູງສຸດນັບແຕ່ປີ 2012 ເປັນຕົ້ນມາ; ແຜນ "ປາບເສືອ-ຕົບແມງວັນ" ຂອງທ່ານມີຄວາມໝາຍວ່າ ຈະບໍ່ໄວ້ໜ້າພະນັກງານຊັ້ນຜູ້ນ້ອຍ (ແມງວັນ) ແລະ ຊັ້ນຜູ້ໃຫຍ່ໆເຕີບໆ (ເສືອ) ທີ່ມີພຶດຕິກຳສໍ້ລາດບັງຫຼວງ, ຟຸ່ມເຟືອຍ, ໃຊ້ອຳນາດຕຳແໜ່ງຫາຜົນປະໂຫຍດເຂົ້າຖົງ. ຂ່າວສານປະເທດລາວປະຈຳວັນທີ 17 ທັນວາ 2014 ບອກວ່າໃນເວລານັ້ນ ພະນັກງານຈີນລະດັບສູນກາງ ແລະ ທ້ອງຖິ່ນ ຈຳນວນ 3,200 ຄົນ ທີ່ມີລູກ ແລະ ເມຍ ຢູ່ຕ່າງປະເທດ ແລະ ພວກກ່ຽວປະຕິເສດທີ່ຈະກັບຄືນມາປະເທດ, ທາງການຈີນມີຫຼັກຖານຢ່າງຄັກແນ່ວ່າພະນັກງານລັດທີ່ມີສະມາຊິກຄອບຄົວຂອງຕົນ ໂອນເງິນໄປຕ່າງປະເທດ ແລະ ມີຄວາມກຽມພ້ອມໃນການຫຼົບໜີ ເພື່ອຫຼີກລ່ຽງການກວດກາແລະຈັບກຸມຕາມແຜນປາບປາມການສໍ້ລາດບັງຫຼວງຂອງລັດຖະບານຈີນ; ຍ້ອນແນວນີ້ເອງ ທາງການຈຶ່ງໄດ້ຢັ້ນຄຳຂາດຕໍ່ພະນັກງານເຫຼົ່ານີ້ ໃຫ້ເລືອກລະຫວ່າງ 2 ເສັ້ນທາງຄື: 1. ຖືກຫຼຸດຊັ້ນ ແລະ ຖືກຍົກຍ້າຍໄປເຮັດວຽກໃນຕຳແໜ່ງຕ່ຳກວ່າແລະ 2. ສັ່ງໃຫ້ສະມາຊິກຄອບຄົວ (ລູກ-ເມຍ) ຂອງຕົນ ກັບຄືນປະເທດໂດຍໄວ. ນີ້ເປັນມາດຕະການທີ່ໄດ້ຜົນທີ່ສຸດໃນການປ້ອງກັນບໍ່ໃຫ້ພະນັກງານທີ່ມີອິດທິພົນ ສວຍໃຊ້ສະມາຊິກຄອບຄົວຕົວເອງ ເປັນເຄື່ອງມືໂອນເງິນອອກນອກປະເທດ ຫຼື ເອົາເງິນໄປຝາກຢູ່ຕ່າງປະເທດ.

ຢູ່ມາເລເຊຍ ການປະຕິບັດແຜນຕ້ານການສໍ້ລາດບັງຫຼວງທີ່ມີຈຸດສຸມແຕ່ປີ 2019-2023 ໄດ້ຮັບຜົນສຳເລັດເປັນຢ່າງດີ. ແຜນປະຕິບັດງານທີ່ວ່ານີ້ ໄດ້ກວມເອົາຂົງເຂດທີ່ມັກມີປາກົດການສໍ້ລາດບັງຫຼວງແບບຊຳເຮື້ອມາແລ້ວ ເຊັ່ນ: ຂົງເຂດການກວດກາການເມືອງ, ການຄຸ້ມຄອງພາກສ່ວນສາທາລະນະ; ການຈັດຊື້ສາທາລະນະ, ການຄຸ້ມຄອງບໍລິສັດ, ການປະຕິບັດກົດໝາຍ ແລະ ການເຄື່ອນໄຫວວຽກຕຸລາການ; ແຜນການໄດ້ກຳນົດເນື້ອໃນລະອຽດທັງໝົດ 115 ຂໍ້ ເພື່ອໃຫ້ແຕ່ລະພາກສ່ວນນຳໄປປະຕິບັດຕົວຈິງ ແນໃສ່ແກ້ໄຂບັນຫາສໍ້ລາດບັງຫຼວງທີ່ເກີດຂຶ້ນໃນຂະແໜງຂອງຕົນ. ຂ່າວໃຫ້ຮູ້ຕື່ມວ່າ ແຜນຕ້ານການສໍ້ລາດບັງຫຼວງແບບມີຈຸດສຸມແຕ່ປີ 2019-2023 ນີ້ ສ້າງຂຶ້ນໃນສະໄໝທ່ານ ມາຮາເທຍ ໂມຮາມັດ ກັບມາເປັນນາຍົກລັດຖະມົນຕີຄັ້ງຫຼ້າສຸດຂອງເພິ່ນ ໂດຍທ່ານໄດ້ມີຄຳເຫັນວ່າ: ແຜນການນີ້ ຈະປູພື້ນທີ່ໜັກແໜ້ນສຳລັບລະບົບກວດກາລັດຖະບານ, ຮັບປະກັນຄວາມປອດໃສຂາວສະອາດ, ກະຕຸ້ນເສດຖະກິດໃຫ້ເຕີບໂຕ ແລະ ຍັງຈະຮັບປະກັນຄວາມໝັ້ນຄົງແຫ່ງຊາດອີກດ້ວຍ.

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຊຸດທີ V ທີ່ໄດ້ດຳເນີນການປ່ອນບັດເລືອກຕັ້ງສຳເລັດເມື່ອວັນທີ 22 ກຸມພາຜ່ານມາ ໂດຍມີຜູ້ໄດ້ຮັບເລືອກຕັ້ງເປັນ ສສຊ ຊຸດທີ X ທັງໝົດ 175 ທ່ານ ໃນນັ້ນ, ມີເພດຍິງ 52 ທ່ານ ກວມເອົາ 29.71% ແລະ ມີຜູ້ໄດ້ຮັບເລືອກຕັ້ງເປັນ ສສຂ ຊຸດທີ V ທັງໝົດ 745 ທ່ານ ໃນນັ້ນ, ມີເພດຍິງ 211 ທ່ານ ກວມເອົາ 28.32% ກອງປະຊຸມໄດ້ຮັບຮອງເອົາຜົນການເລືອກຕັ້ງດັ່ງກ່າວຢ່າງເປັນເອກະສັນ.

2. ພິຈາລະນາ, ຮັບຮອງເອົາໂຄງປະກອບກົງຈັກການຈັດຕັ້ງ, ເລືອກຕັ້ງ ແລະ ຮັບຮອງເອົາບຸກຄະລາກອນຂອງລະບົບອຳນາດລັດ ດ້ວຍຄະແນນເຫັນດີເປັນເອກະສັນ ໂດຍເລືອກຕັ້ງທ່ານ ໄຊສົມພອນ ພົມວິຫານ ເປັນປະທານສະພາແຫ່ງຊາດ, ທ່ານ ນາງ ສູນທອນ ໄຊຍະຈັກ, ທ່ານ ກອງແກ້ວ ໄຊສົງຄາມ, ທ່ານ ວິໄລວົງ ບຸດດາຄຳ ແລະ ທ່ານ ມອນໄຊ ລາວມົວຊົ່ງ ເປັນຮອງປະທານສະພາແຫ່ງຊາດ ແລະກຳມະການຄະນະປະຈຳສະພາແຫ່ງຊາດ ຈຳນວນ 6 ທ່ານ ຍິງ 2 ທ່ານ; ຮັບຮອງເອົາກົງຈັກຂອງສະພາແຫ່ງຊາດ ປະກອບມີ 5 ກຳມາທິການ ແລະ ຫ້ອງວ່າການ; ເລືອກຕັ້ງທ່ານ ທອງລຸນ ສີສຸລິດເປັນປະທານປະເທດ, ທ່ານ ນາງ ວຽງທອງ ສີພັນດອນ ເປັນຮອງປະທານປະເທດ; ເລືອກຕັ້ງທ່ານ ສອນໄຊ ສີພັນດອນ ເປັນນາຍົກລັດຖະມົນຕີ, ຮັບຮອງການສະເໜີແຕ່ງຕັ້ງທ່ານ ສະເຫຼີມໄຊ ກົມມະສິດ, ທ່ານ ຄຳພັນ ພົມມະທັດ, ທ່ານ ທອງສະລິດ ມັງໜໍ່ເມກ, ທ່ານ ພົອ. ຄຳລຽງ ອຸທະໄກສອນ, ທ່ານ ສັນຕິພາບ ພົມວິຫານແລະທ່ານ ທອງສະຫວັນ ພົມວິຫານ ເປັນຮອງນາຍົກລັດຖະມົນຕີ ແລະ ຮັບຮອງເອົາກົງຈັກຂອງລັດຖະບານ ປະກອບມີ 13 ກະຊວງ, 2 ອົງການທຽບເທົ່າ ແລະ ຮັບຮອງເອົາການແຕ່ງຕັ້ງສະມາຊິກລັດຖະບານອີກຈຳນວນ 10 ທ່ານ ຍິງ 03 ທ່ານ; ຮັບຮອງເອົາການເລືອກຕັ້ງທ່ານ ໄພວີ ສີບົວລິພາ ເປັນປະທານສານປະຊາຊົນສູງສຸດ, ທ່ານ ພົຈວ. ນາງ ລີວົງ ລາວລີ ເປັນຫົວໜ້າອົງການໄອຍະການປະຊາຊົນສູງສຸດ; ທ່ານ ວັນໄຊ ພອງສະຫວັນ ເປັນປະທານອົງການກວດກາແຫ່ງລັດ ແລະ ທ່ານ ວຽງທະວິສອນ ເທບພະຈັນ ເປັນປະທານອົງການກວດສອບແຫ່ງລັດ.

3. ພິຈາລະນາ, ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ຂອງລັດຖະບານ; ໂຄງການລົງທຶນກໍ່ສ້າງເສັ້ນທາງລົດໄຟຈາກຕົວເມືອງທ່າແຂກ ແຂວງຄຳມ່ວນ ຫາ ມູຢາ ຊາຍແດນລາວ ຫວຽດນາມ ດ້ວຍຮູບແບບ BOT; ແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ; ແຜນການເຄື່ອນໄຫວວຽກງານ 5 ປີ (2026-2030), ແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X. ພ້ອມນີ້, ຍັງໄດ້ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ ເຊິ່ງປະກອບມີຈຳນວນ 15 ທ່ານ ຍິງ 03 ທ່ານ.

4. ໄດ້ອອກເປັນມະຕິກອງປະຊຸມສະພາແຫ່ງຊາດທັງໝົດ 20 ສະບັບ ດັ່ງນີ້:

1) ມະຕິວ່າດ້ວຍການຮັບຮອງເອົາການເລືອກຕັ້ງປະທານສະພາແຫ່ງຊາດ ຊຸດທີ X;

2) ມະຕິວ່າດ້ວຍການຮັບຮອງເອົາການເລືອກຕັ້ງຮອງປະທານສະພາແຫ່ງຊາດ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ ຊຸດທີ X;

3) ມະຕິວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກຂອງສະພາແຫ່ງຊາດ ຊຸດທີ X, ການແຕ່ງຕັ້ງປະທານກຳມາທິການແລະຫົວໜ້າຫ້ອງວ່າການສະພາແຫ່ງຊາດ ຊຸດທີ X;

4) ມະຕິວ່າດ້ວຍການຮັບຮອງເອົາການເລືອກຕັ້ງປະທານປະເທດ;

5) ມະຕິວ່າດ້ວຍການຮັບຮອງເອົາການເລືອກຕັ້ງຮອງປະທານປະເທດ;

6) ມະຕິວ່າດ້ວຍການຮັບຮອງເອົາການເລືອກຕັ້ງນາຍົກລັດຖະມົນຕີ;

7) ມະຕິວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກຂອງລັດຖະບານ, ການແຕ່ງຕັ້ງຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ ຊຸດທີ X;

8.) ມະຕິວ່າດ້ວຍການຮັບຮອງເອົາການເລືອກຕັ້ງປະທານສານປະຊາຊົນສູງສຸດ;

9) ມະຕິວ່າດ້ວຍການຮັບຮອງເອົາການເລືອກຕັ້ງຫົວໜ້າອົງການໄອຍະການປະຊາຊົນສູງສຸດ;

10) ມະຕິວ່າດ້ວຍການຮັບຮອງເອົາການເລືອກຕັ້ງປະທານອົງການກວດກາແຫ່ງລັດ;

11) ມະຕິວ່າດ້ວຍການຮັບຮອງເອົາການເລືອກຕັ້ງປະທານອົງການກວດສອບແຫ່ງລັດ;

12) ມະຕິວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ;

13) ມະຕິວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນສູງສຸດ;

14) ມະຕິວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການໄອຍະການປະຊາຊົນສູງສຸດ;

15) ມະຕິວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດກາແຫ່ງລັດ;

16) ມະຕິວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດສອບແຫ່ງລັດ;

17) ມະຕິວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ ແຕ່ປີ 2026-2030 ຂອງສະພາແຫ່ງຊາດ ຊຸດທີ X;

18) ມະຕິວ່າດ້ວຍການຮັບຮອງເອົາແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X;

19) ມະຕິວ່າດ້ວຍການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ຂອງລັດຖະບານ;

20) ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການພິຈາລະນາ, ຮັບຮອງເອົາດ້ານຫຼັກການ ໂຄງການລົງທຶນກໍ່ສ້າງເສັ້ນທາງລົດໄຟ ແຕ່ຕົວເມືອງທ່າແຂກ ແຂວງຄຳມ່ວນ ຫາ ມູຢ່າ ຊາຍແດນລາວ-ຫວຽດນາມ ດ້ວຍຮູບແບບ BOT.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ຍັງກ່າວອີກວ່າ: ໄລຍະດຳເນີນກອງປະຊຸມ ໄດ້ມີປະຊາຊົນສົ່ງຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ (156) ລວມທັງໝົດ 274 ສາຍ, ສັງລວມໄດ້ 126 ເລື່ອງ ເຊິ່ງພົວພັນເຖິງການພັດທະນາເສດຖະກິດ-ສັງຄົມ, ການຄຸ້ມຄອງບໍລິຫານລັດ ເປັນຕົ້ນບັນຫານ້ຳມັນເຊື້ອໄຟຂາດແຄນ, ລາຄານ້ຳມັນແພງ ແລະ ຄາລາເໜັງຕີງທຸກວັນ, ບັນຫາສິນຄ້າລາຄາແພງ, ການຊົດເຊີຍຜົນກະທົບຈາກໂຄງການພັດທະນາ, ບັນຫາຜົນກະທົບຈາກໄພທຳມະຊາດ ແລະ ບັນຫາອື່ນໆ; ຕໍ່ຄຳຄິດເຫັນ, ຄຳສະເໜີທີ່ສົ່ງມານັ້ນ, ກອງເລຂາກອງປະຊຸມ ພວມສັງລວມເພື່ອມອບໃຫ້ກຳມາທິການທີ່ກ່ຽວຂ້ອງ ປະສານສົມທົບກັບບັນດາກະຊວງ-ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການກ່ຽວຂ້ອງ ຄົ້ນຄວ້າພິຈາລະນາແກ້ໄຂຕາມພາລະບົດບາດຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອລາຍງານຄືນສະພາແຫ່ງຊາດ.

**(ນາງ ອາລິນ ສຸພົມມະປະດິດ)**




*#ບ່າວກະບື*

| | |
|---|---|
| **ຜູ້ບ່າວ:** | "ຫາກນ້ອງເອົາເລກໂທໃຫ້ອ້າຍ ອ້າຍຈະໂທຫານ້ອງເປັນບາງໂອກາດ" |
| **ຜູ້ສາວ:** | "ເບິ່ງເອົາເອງຢູ່ປຶ້ມໂທລະສັບ" |
| **ຜູ້ບ່າວ:** | "ດີ! ຊັ້ນ... ຊື່ນ້ອງວ່າແນວໃດ?" |
| **ຜູ້ສາວ:** | "ຊື່ກໍມີຢູ່ໃນປຶ້ມໂທລະສັບຄືກັນ" |

*#BAOKBU*

| | |
|---|---|
| **BOY:** | "If you give me your telephone number I'll call you up sometimes" |
| **GIRL:** | "It's in the book" |
| **BOY:** | "Fine! what's your name?" |
| **GIRL:** | "That's in the book too" |

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພິດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມົ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ